ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ຕຸລາ 2024
ປີທີ 13
ສະບັບທີ 989
ລາຍສັປະດາ

## ປະທານສະພາແຫ່ງຊາດ ຕ້ອນຮັບຫົວໜ້າອົງການໄອຍະການສູງສຸດ ສ.ກູບາ



(ສພຊ) - ວັນທີ 1 ຕຸລາ ຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບສະຫາຍ ນາງ ຢາມິລາ ເປນາ ໂອເຈດາ (Yamila Pena Ojeda) ກຳມະການສູນກາງພັກກອມມູ

ອ່ານຕໍ່ໜ້າ 8




## ແຂວງຄຳມ່ວນ ສະໜັບສະໜູນ ກອງປະຊຸມໄອປາ 1 ຕື້ກວ່າກີບ




ອ່ານຕໍ່ໜ້າ 3

## ມອບວັດຖຸພັນ ເຂົ້າຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ໃນພິທີເປີດຫ້ອງມູນເຊື້ອຂອງສະພາແຫ່ງຊາດ ຢ່າງເປັນທາງການ ໃນຕອນບ່າຍວັນທີ 30 ກັນຍາຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງ

ອ່ານຕໍ່ໜ້າ 12

## ຮອງປະທານສະພາແຫ່ງຊາດ ເຮັດວຽກຢູ່ບ້ານບົວນອງຄຳ



(ສພຊ) - ເພື່ອຕິດຕາມກວດກາການການຈັດຕັ້ງປະຕິບັດວຽກງານ 3 ສ້າງ, ວັນອາທິດທີ 29 ກັນຍາຜ່ານມາ, ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ເຊິ່ງປະກອບມີທ່ານ ປອ. ສຸວັນນີ ໄຊຊະນະຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11; ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ຮອງປະທານກຳມາທິການບັນດາເຜົ່າ; ສະມາຊິກສະພາປະຊາຊົນແຂວງປະຈຳເມືອງປາກຊັນ; ຕາງໜ້າຫ້ອງວ່າການ

ອ່ານຕໍ່ໜ້າ 8

## ຕິດຕາມກວດກາວຽກງານ 3 ສ້າງ ຢູ່ສາລະວັນ ແລະ ຈຳປາສັກ



(ສພຊ) - ລະຫວ່າງວັນທີ 30 ກັນຍາ - 4 ຕຸລາ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຢູ່ 2 ແຂວງຄື: ສາລະວັນ ແລະ ຈຳປາສັກ ໃນນັ້ນ, ແຂວງສາລະວັນ ເຄື່ອນໄຫວຢູ່ເມືອງລະຄອນເພັງ ແລະ ເມືອງ

ອ່ານຕໍ່ໜ້າ 8

## ສືບຕໍ່ຄົ້ນຄວ້າ, ວິໄຈ ແລະ ປັບປຸງເນື້ອໃນລັດຖະທຳມະນູນ

(ສພຊ) - ເພື່ອຄົ້ນຄວ້າ, ວິໄຈແລະເລືອກເຟັ້ນຄຳສະເໜີຂອງການຈັດຕັ້ງ ແລະ ບຸກຄົນຈາກຜົນການປະເມີນການປະຕິບັດລັດຖະທຳມະນູນ ສະບັບປີ 2015 ປັບປຸງເຂົ້າເນື້ອໃນໝວດແລະມາດຕາຂອງລັດຖະທຳມະນູນສະບັບປັບປຸງໃໝ່ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ສາມາດນຳໄປສູ່ການ ພິຈາລະນາຮັບຮອງທັງເປັນການຄົ້ນຄວ້າ, ວິໄຈເນື້ອໃນ ແລະ ສະເໜີເພີ່ມເນື້ອໃນທີ່ສັງລວມໄດ້ຈາກການປະເມີນເຂົ້າໃສ່ມາດຕາ ຫຼື ວັກໃດໜຶ່ງຂອງມາດຕາທີ່ເຫັນວ່າມີຄວາມຈຳເປັນຕ້ອງປັບປຸງ ເພື່ອໃຫ້ສອດຄ່ອງ ແລະຕອບສະໜອງກັບສະພາບການພັດທະນາໃນໄລຍະໃໝ່ ໃຫ້ເປັນຮ່າງສະບັບປັບປຸງເບື້ອງຕົ້ນ ແລ້ວສະຫຼຸບສັງລວມຜົນຂອງການຄົ້ນຄວ້າເນື້ອໃນຂອງແຕ່ລະໝວດ ແລະ ມາດຕາຢ່າງລະອຽດ ເພື່ອລາຍງານຂໍທິດຊີ້ນຳ.



ຕອນເຊົ້າວັນທີ 3 ຕຸລາ ນີ້ ທີ່ໂຮງແຮມເມືອງແທ່ງ, ນະຄອນຫຼວງວຽງຈັນ ໄດ້ຈັດກອງປະຊຸມສືບຕໍ່ຄົ້ນຄວ້າ, ວິໄຈ ແລະ ປັບປຸງເນື້ອໃນລັດຖະທຳມະນູນ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 (ຄລຊ); ເຂົ້າຮ່ວມມີບັນດາທ່ານຄະນະກຳມະການ, ກອງເລຂາ, ອະນຸກຳມະການຕ່າງໆ ຂອງ ຄລຊ ແລະພາກສ່ວນທີ່ກ່ຽວຂ້ອງ.

ບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ, ອະທິບາຍ, ປະກອບຄວາມເຫັນຢ່າງກົງໄປກົງມາ, ມີເນື້ອໃນເລິກເຊິ່ງ ແລະ ຫຼາຍເທື່ອຄົນ ລ້ວນແຕ່ເປັນບັນຫາທີ່ມີຄວາມສຳຄັນ ແລະ ເປັນບ່ອນອີງໃຫ້ ແກ່ການປັບປຸງເນື້ອໃນລັດຖະທຳມະນູນ ໃຫ້ແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນແລະສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມເຂັ້ມງວດ, ສັກສິດ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າຢ່າງແທ້ຈິງ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**



ຄົນອາວຸໂສ... (ໜ້າ 9)



ຄາລິຟໍເນຍ... (ໜ້າ 11)




ຫຼິ້ນກັບໜ້າຈໍ 3 ຊົ່ວໂມງ... (ໜ້າ 12)

**ຂໍ່ານັບຊົມເຊີຍວັນປະກາດເອກະລາດແຫ່ງຊາດ ຄົບຮອບ 79 ປີ (12 ຕຸລາ 1945 - 12 ຕຸລາ 2024) ຢ່າງສຸດໃຈ!**

# ປະທານສະພາແຫ່ງຊາດ ຕ້ອນຮັບທູດຈີນເຂົ້າຢ້ຽມຂໍ່ານັບ



(ສພຊ) - ວັນທີ 1 ຕຸລາ ຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ນາງ ຟາງ ຫົງ (Fang Hong) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປຈີນ ປະຈຳ ສປປລາວ ຄົນໃໝ່; ປະທານສະພາແຫ່ງຊາດ ໄດ້ສະແດງຄວາມຊົມເຊີຍທີ່ສະຫາຍ ນາງ ຟາງ ຫົງ ມາຮັບໜ້າທີ່ໃໝ່ຢູ່ ສປປລາວ ຄັ້ງນີ້ ໂດຍເຊື່ອໝັ້ນວ່າຈະສືບຕໍ່ເປັນຂົວຕໍ່ມິດຕະພາບທີ່ສຳຄັນໃນການຮັດແໜ້ນ ແລະເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະ ຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ເກີດດອກອອກຜົນຍິ່ງຂຶ້ນກວ່າເກົ່າ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ.

ເນື່ອງໃນໂອກາດວັນສະຖາປະນາສາທາລະນະລັດປະຊາຊົນຈີນ ຄົບຮອບ 75 ປີ (01/10/1949-01/ 10/2024), ໃນນາມສະພາແຫ່ງຊາດສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍອັນອົບອຸ່ນ ແລະ ອວຍພອນໄຊອັນປະເສີດຕໍ່ສະຫາຍ ນາງ ຟາງ ຫົງ ແລະພະນັກງານສະຖານທູດທຸກສະຫາຍ ຈົ່ງມີສຸຂະພາບພະລານາໄມສົມບູນ, ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດສະຫງ່າຂອງຕົນ.

ສະພາແຫ່ງຊາດລາວ ແລະສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ມີການພົວພັນຮ່ວມມືທີ່ເປັນມູນເຊື້ອ ອັນດີງາມມາແຕ່ດົນນານ ແລະ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງແລະເປັນຮູບປະທຳ ເຊິ່ງສະແດງອອກມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ, ແລກປ່ຽນບົດຮຽນ, ຮ່ວມກັນຈັດສຳມະນາ ແລະ ເຝິກອົບຮົມທັດສະນະສຶກສາ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງສອງອົງການນິຕິບັນຍັດ; ສອງຝ່າຍຍັງໄດ້ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ AIPA, IPU, ASEP, APPF ແລະ ອື່ນໆ; ເດືອນກັນຍາ 2023 ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ນຳພາຄະນະຜູ້ ແທນຂັ້ນສູງຂອງສະພາແຫ່ງຊາດ ໄປຢ້ຽມຢາມ ສປຈີນ ຢ່າງເປັນທາງການ ແລະ ລົງນາມຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເຊິ່ງເປັນນິຕິກຳສະບັບທຳອິດຂອງສອງອົງການນິຕິບັນຍັດ ລາວ-ຈີນ.

ສະຫາຍ ນາງ ຟາງ ຫົງ ໄດ້ສະແດງຄວາມຂອບໃຈຕໍ່ປະທານສະພາແຫ່ງຊາດທີ່ໃຫ້ການຕ້ອນຮັບອັນອົບອຸ່ນ, ຄຳອວຍພອນອັນປະເສີດ, ຄຳຊົມເຊີຍ ແລະ ຄຳເວົ້າອັນຈິບງາມ ພ້ອມທັງແຈ້ງໃຫ້ຊາບໂດຍຫຍໍ້ສະພາບການທີ່ພົ້ນເດັ່ນຂອງປະເທດຈີນ; ຢືນຢັນວ່າ ຈະສືບຕໍ່ຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ຈີນ-ລາວ, ລາວ-ຈີນ.

ໂອກາດດັ່ງກ່າວ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ຢໍ້າຄືນການເຊື້ອເຊີນສະພາຜູ້ແທນປະຊາຊົນ ທົ່ວປະເທດຈີນ ໃນນາມລັດຖະສະພາປະເທດສັງເກດການໄອປາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນລະຫວ່າງວັນທີ 17-23 ຕຸລານີ້ແລະຫວັງຢ່າງຍິ່ງວ່າ ການມາເຂົ້າຮ່ວມກອງປະຊຸມຄັ້ງສຳຄັນນີ້ ກໍເປັນການສະໜັບສະໜູນ ແລະ ຊ່ວຍເຫຼືອສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວໃຫ້ສຳເລັດຜົນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ປະທານສະພາແຫ່ງຊາດ ຮັບການເຂົ້າຢ້ຽມຂໍ່ານັບຂອງທູດໄທ




(ສພຊ) - ວັນຈັນທີ 30 ກັນຍາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ມໍຣະກົດ ສີສະຫວັດ ເອກອັກຄະລາຊະທູດ ແຫ່ງ ລາຊະອານາຈັກໄທ ປະຈຳ ສປປລາວ ໂດຍທ່ານປະທານສະພາແຫ່ງຊາດ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບ ແລະຊົມເຊີຍຕໍ່ທ່ານທູດທີ່ປະຕິບັດໜ້າທີ່ປະສານສົມທົບກັບ ສປປລາວ ທັງສາຍລັດບໍລິຫານ ແລະ ສາຍນິຕິບັນຍັດ ໂດຍສະເພາະເປັນເຈົ້າການໃນການຊຸກຍູ້, ສົ່ງເສີມແລະສະໜັບສະໜູນການເປັນປະທານອາຊຽນ ແລະ ປະທານໄອປາ ຂອງ ສປປລາວ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມຂອງສອງປະເທດ ກໍຄືການເປັນຄູ່ຮ່ວມຍຸດທະສາດເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ໃຫ້ນັບມື້ຈະເລີນງອກງາມຍິ່ງໆຂຶ້ນ; ສະແດງຄວາມຂອບໃຈລັດຖະບານ ແລະ ລັດຖະສະພາ ກໍຄືປະຊາຊົນໄທ ທີ່ໃຫ້ການສະໜັບສະໜູນທັງດ້ານຊຸ່ງວຊານ ແລະ ວັດຖຸປັດໃຈ ປະກອບສ່ວນຊ່ວຍໃນການຈັດຕັ້ງກອງປະຊຸມໄອປາ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບໃນປີນີ້ ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ.

ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ-ໄທ ໃນໄລຍະຜ່ານມາ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ສອງຝ່າຍມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນເປັນປົກກະຕິ, ອັນພົ້ນເດັ່ນໃນເດືອນຕຸລາ 2022 ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ນຳພາຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ຢ້ຽມຢາມຢ່າງເປັນທາງການຢູ່ປະເທດໄທ ແລະ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາໄທເປັນສະບັບທຳອິດຂອງສອງອົງການນິຕິບັນຍັດ ລາວ-ໄທ; ສອງຝ່າຍໄດ້ສະໜັບສະໜູນເຊິ່ງກັນແລະກັນຕະຫຼອດມາທັງໃນຂອບສອງຝ່າຍ ແລະຫຼາຍຝ່າຍ.

ທ່ານ ນາງ ມໍຣະກົດ ສີສະຫວັດ ໄດ້ກ່າວສະແດງຄວາມຂອບໃຈຢ່າງສູງທີ່ທ່ານປະທານສະພາແຫ່ງຊາດ ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບກ່ຽວກັບຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ແລະນຳເງິນ ຈຳນວນ 2.1 ລ້ານບາດມາມອບເພື່ອອຸປະຖຳການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງຕາງໜ້າຮັບໂດຍທ່ານ ນາງອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ຈາກນັ້ນທ່ານປອ. ໄຊສົມພອນ ພົມວິຫານ ໄດ້ມອບໃບຍ້ອງຍໍໃຫ້ລັດຖະບານແຫ່ງລາຊະອານາຈັກໄທທີ່ປະກອບສ່ວນອຸປະຖຳໃນຄັ້ງນີ້.

**(ສອນສັກ ວັນວິໄຊ)**

# ປະເມີນການປະຕິບັດປຶ້ມຄູ່ມືພົບປະປະຊາຊົນ




(ສພຊ) - ວັນທີ 30 ກັນຍາ - 02 ຕຸລາ 2024 ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ໄດ້ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດປຶ້ມຄູ່ມືການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ທີ່ເມືອງນາກາຍ ແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເຊິ່ງມີບັນດາທ່ານຮອງປະທານກຳມາທິການດັ່ງກ່າວ, ປະທານ-ຮອງປະທານ, ຄະນະເລຂາທິການ ແລະ ພະນັກງານຂະແໜງຊ່ວຍວຽກ ສສຊ ຈາກສະພາປະຊາຊົນຂັ້ນແຂວງ9ແຂວງ ຄື: ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື, ໄຊສົມບູນແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ; ທັງນີ້, ກໍເພື່ອປະເມີນຄືນຜົນການທົດລອງນຳໃຊ້ປຶ້ມຄູ່ມືການພົບປະປະຊາຊົນໃນໄລຍະຜ່ານມາ ໃຫ້ເຫັນໄດ້ດ້ານດີ, ຂໍ້ຄົງຄ້າງ ແລະ ທິດທາງປັບປຸງ ທັງເປັນການແລກປ່ຽນຄຳເຫັນຂອງບັນດາທ່ານຜູ້ແທນຈາກທົ່ວປະເທດ ແລະ ປັບປຸງຄືນເນື້ອ ໃນປຶ້ມດັ່ງກ່າວ ໃຫ້ມີຄຸນນະພາບທີ່ດີ, ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດນຳໃຊ້ໄດ້ຍາວນານ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດປະເມີນການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ປຶ້ມຄູ່ມືການລົງພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຈາກ ກວສຊ, ສັງລວມການພົບປະປະຊາຊົນ ໂດຍລົງເລິກການຈັດຕັ້ງປະຕິບັດການກະກຽມພົບປະປະຊາຊົນຂອງ ສສຊ ແລະສສຂ ຈາກສະພາປະຊາຊົນ ນະຄອນຫຼວງວຽງຈັນ, ການຈັດຕັ້ງປະຕິບັດການດຳເນີນພົບປະປະຊາຊົນ ຂອງ ສສຊ ແລະ ສສຂ ຈາກ ສພຂ ຄຳມ່ວນ, ການຈັດຕັ້ງປະຕິບັດຜົນການພົບປະປະຊາຊົນຂອງ ສສຊ ແລະ ສສຂ ຈາກ ສພຂ ອັດຕະປື, ການຈັດຕັ້ງປະຕິບັດການພົບປະປົກກະຕິ ແລະ ການພົບປະສະເພາະ ຂອງ ສສຊ ແລະ ສສຂ ຈາກ ສພຂ ໄຊສົມບູນ; ຈາກນັ້ນ, ກໍໄດ້ຄົ້ນຄວ້າ, ສົນທະນາແລກປ່ຽນຄຳຄິດເຫັນຢ່າງມີຈຸດສຸມ ແລະ ກົງປະເດັນມີລັກສະນະຫຼັກການ ເພື່ອເຮັດໃຫ້ເນື້ອໃນມີຄວາມຊັດເຈນ ແລະ ສາມາດນຳໄປຈັດຕັ້ງປະຕິບັດ.

ທ່ານ ສຸບັນ ສະວະບຸດ ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ ມີຄວາມສຳຄັນຫຼາຍ ເປັນການສະຫຼຸບຖອດຖອນ ບົດຮຽນການຈັດຕັ້ງປະຕິບັດປຶ້ມຄູ່ມືການພົບປະປະຊາຊົນຂອງ ສສຊ ແລະ ສສຂ ເຊິ່ງບັນດາທ່ານຜູ້ແທນໄດ້ປະກອບຄຳເຫັນ ແລະ ຍົກໃຫ້ເຫັນບັນຫາ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດໄລຍະຜ່ານມາແລະກໍໄດ້ສະເໜີປັບປຸງບາງຈຸດຕື່ມ ເຊິ່ງທັງໝົດນີ້ເປັນຂໍ້ມູນທີ່ດີໃຫ້ແກ່ຄະນະຮັບຜິດຊອບນຳໄປຄົ້ນຄວ້າ, ປັບປຸງໃນຕໍ່ໜ້າ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກອົງການເຮວວີຕັສ (Helvetas) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານ ຂອງຄະນະເລຂາທິການສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

# 2 ບໍລິສັດ ສະໜັບສະໜູນ ກອງປະຊຸມໄອປາ ຄັ້ງທີ 45



(ສພຊ) - ວັນຈັນທີ 30 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ, ບໍລິສັດຫຸ້ນສ່ວນລົງທຶນ ແລະ ພັດທະນາພະລັງງານ ຫວຽດນາມ-ລາວ (Công ty Cổ phần đầu tư và phát triển năng lượng Việt-Lào) ໄດ້ ນຳເງິນ ສົດ 4,008,500,000 ກີບ ແລະ ບໍລິສັດ 3 ບີ ກຣຸບ ຈຳກັດ (3BGROUPCO.,LTD) ໄດ້ ນຳເງິນ ສົດ 2,000,000,000 ກີບ ມາມອບໃຫ້ສະພາແຫ່ງຊາດ ເພື່ອເປັນການປະກອບສ່ວນສະໜັບສະໜູນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງກ່າວຮັບໂດຍທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ມີຕາງໜ້າທັງສອງຝ່າຍເຂົ້າຮ່ວມເປັນສັກຂີພະຍານ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ຍົກສູງຄວາມສາມາດກະກຽມຮັບໃຊ້ກອງປະຊຸມໄອປາ



(ສພຊ) - ກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດໃນການກະກຽມເນື້ອໃນຕ່າງໆ ແລະ ທັກສະໃນການຮ່າງບົດລາຍງານຫຍໍ້, ການບັນທຶກ, ບົດສັງລວມຂໍ້ມູນ, ການຕິພິມ (Track-Changes) ແລະ ອື່ນໆ ໃຫ້ແກ່ວິຊາການໃນການກະກຽມຄວາມພ້ອມຮັບໃຊ້ກອງປະຊຸມໄອປາ (AIPA) ຄັ້ງທີ 45 ໄດ້ຈັດຂຶ້ນໃນວັນທີ 1-2 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ ເຊິ່ງການເຝິກອົບຮົມເນັ້ນໃສ່ບັນຫາສຳຄັນດັ່ງນີ້:

1. ການດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45: ວາລະການປະຊຸມ, ຂັ້ນຕອນ, ປະເດັນເຫດການທີ່ສຳຄັນ, ພາບລວມຂອງຄະນະກຳມະການ;

2. ຂໍ້ມູນເບື້ອງຕົ້ນກ່ຽວກັບກອງປະຊຸມສະມັດຊາໃຫຍ່ໄອປາ (ຄວາມເປັນມາຂອງ AIPA, ໜ້າທີ່, ກົດລະບຽບ ແລະ ແນວທາງໃນການປະຕິບັດ);

3. ຄູ່ມື, ການຮ່າງບົດລາຍງານຫຍໍ້, ການບັນທຶກ, ການສັງລວມຂໍ້ມູນ, ການຕິພິມ, ບົດລາຍງານຂອງກອງປະຊຸມກຳມາທິການ ແລະ ກອງປະຊຸມພົບປະກັບປະເທດສັງເກດການ, ຂັ້ນຕອນ ແລະ ເຫດການຕ່າງໆ;

4. ການກະກຽມກອງປະຊຸມສາກົນ ໂດຍເນັ້ນໜັກການກະກຽມຄວາມພ້ອມແລະການດຳເນີນກອງປະຊຸມ, ພາລະບົດບາດ-ໜ້າທີ່ຂອງພະນັກງານຮັບໃຊ້, ການທົບທວນຄືນແລະປັບປຸງເອກະສານ, ການເຂົ້າເຖິງຂໍ້ມູນ;

5. ການກະກຽມຄວາມພ້ອມໃຫ້ແກ່ກອງປະຊຸມກຳມາທິການຕ່າງໆ;

6. ຂັ້ນຕອນການກະກຽມຮ່າງມະຕິ ແລະ ການຄົ້ນຄວ້າປະກອບຄຳເຫັນຂອງຄະນະຜູ້ແທນ;

7. ການກະກຽມເອກະສານສຳລັບກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ-ໄອປາ, ໜ້າທີ່ຄວາມຮັບຜິດຊອບ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ.

ທ່ານ ນາງ ວັນດີ ບຸດທະສະວົງ ໄດ້ມີຄຳເຫັນວ່າ: ການເຝິກອົບຮົມຄັ້ງນີ້ ເປັນໂອກາດທີ່ດີໃຫ້ແກ່ຜູ້ເຂົ້າຮ່ວມໄດ້ຮຽນຮູ້, ແລກປ່ຽນປະສົບການ, ຖອດຖອນບົດຮຽນນຳຊ່ຽວຊານມາຈາກຫຼາຍປະເທດ, ຫຼາຍສາຂາວິຊາທີ່ຈະສົ່ງຄວາມຮູ້ໃຫ້ເພື່ອນຳໄປໃຊ້ເຂົ້າໃນວຽກງານຕົວຈິງ ໂດຍສະເພາະແມ່ນບັນດາໜ້າວຽກທີ່ຈະໄດ້ກະກຽມຄວາມພ້ອມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ຈະເປີດຂຶ້ນໃນມໍ່ໆນີ້.

ກອງປະຊຸມຄັ້ງນີ້ ມີບັນດາຄະນະຮັບຜິດຊອບຈາກແຕ່ລະອະນຸກຳມະການທີ່ຮັບໃຊ້ກອງປະຊຸມໃຫຍ່ໄອປາ ຄັ້ງທີ 45, ຊ່ຽວຊານທີ່ມາຈາກຕ່າງປະເທດ, ກອງເລຂາໄອປາ, ສູນຄົ້ນຄວ້າລັດຖະສະພາອາຊີ (PCASia), ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ແລະ ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ (ICPMS) ເຂົ້າຮ່ວມຢ່າງພ້ອມພຽງ ໂດຍໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກສະເຕັບສ໌ ໂດຍຜ່ານ ICPMS ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ກົງທະນູຄຳ ພິພັດເສລີ)**

# ມອບເຄື່ອງຊ່ວຍເຫຼືອ ຜູ້ປະສົບໄພນ້ຳຖ້ວມຢູ່ເມືອງຊຳເໜືອ




(ສພຊ) - ວັນອາທິດທີ 29 ກັນຍາຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະໄດ້ນຳເອົາເຄື່ອງຊ່ວຍເຫຼືອທີ່ສະພາແຫ່ງຊາດ (ສພຊ) ລະດົມຂົນຂວາຍ ແລະ ຂໍການອຸປະຖຳຈາກພາກສ່ວນຕ່າງໆ ໄປມອບໃຫ້ແກ່ປະຊາຊົນຜູ້ທີ່ປະສົບໄພພິບັດນ້ຳຖ້ວມຢູ່ເມືອງຊຳເໜືອ ແຂວງຫົວພັນ ເພື່ອເປັນການແບ່ງເບົາແລະບັນເທົາທຸກ; ຕາງໜ້າ ສພຊ ກ່າວມອບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ແລະກ່າວຮັບໂດຍທ່ານຄຳແພງ ໄຊສົມແພງ ເຈົ້າແຂວງຫົວພັນ ເຊິ່ງມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ທ່ານ ນາງ ມະນີວັນ ເຢຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ຕາງໜ້າກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ, ທ່ານ ຄອນປະພັນ ເລືອງສີຈັນທອງ ປະທານສະພາປະຊາຊົນແຂວງຫົວພັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ເຄື່ອງຊ່ວຍເຫຼືອທີ່ນຳມາມອບຄັ້ງນີ້ລວມມີເງິນສົດ 100 ລ້ານກີບ ທີ່ໄດ້ຮັບຈາກ: ຄະນະທີ່ປຶກສາສະຫະພັນກິລາໝາກແລ້, ຊຸດເຝິກອົບຮົມຄອບຄົວການນຳຊຸດທີ 1 ແລະ ທີມງານສາຍບຸນ 50 ລ້ານກີບ; ຄອບຄົວທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ 30 ລ້ານກີບ; ຄະນະເລຂາທິການສະພາແຫ່ງຊາດ 7 ລ້ານກີບ; ຄອບຄົວທ່ານ ຄຳແພງ ວິລະພັນ 5 ລ້ານ; ບໍລິສັດ ຍອດນິຍົມການຄ້າ ຈຳກັດຜູ້ດຽວ (ຈຳໜ່າຍແອ ມີເດຍ Medea) 5 ລ້ານກີບ; ຄອບຄົວທ່ານ ນາງ ວັນນະລິນ ສຸລີວົງສັກ (ພະນັກງານກົມສື່ມວນຊົນ ສພຊ) 3 ລ້ານກີບ. ເຄື່ອງອຸປະໂພກ-ບໍລິໂພກ ທີ່ໄດ້ຮັບຈາກສະພາແຫ່ງຊາດ ປະກອບມີ: ສາດ 500 ຜືນ, ຜ້າຫົ່ມ 500 ຜືນ, ໝອນນອນ 500 ໜ່ວຍ, ມຸ້ງ 500 ດາງ ລວມມູນຄ່າ 167.5 ລ້ານກີບ; ເຄື່ອງຈາກກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ປະກອບມີ: ເຂົ້າໜຽວ 800 ເປົາ (10 ໂຕນ), ເຂົ້າສຳເລັດຮູບ 20 ແກັດ, ຜ້າຫົ່ມ 10 ຜືນ, ສາດ 10 ຜືນ, ມຸ້ງ 10 ດາງ ລວມມູນຄ່າ 144,015,000 ກີບ; ເຄື່ອງຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະກອບມີ: ຖົງຢັ້ງຊີບ 400 ຖົງ, ສະບູ 162 ກ້ອນ, ປາກະປ໋ອງ 1 ແກັດ (10 ແພັກ), ຢາຖູແຂ້ວ 144 ຫຼອດ (3 ແກັດ), ຢາສະຫົວ 1 ແກັດ, ເຄື່ອງນຸ່ງມືສອງຈຳນວນໜຶ່ງ ລວມມູນຄ່າ 78.89 ລ້ານກີບ; ເຄື່ອງຈາກສະມາຄົມທຸລະກິດຢາ ແລະຜະລິດຕະພັນການແພດປະກອບມີ: ຢາປົວພະຍາດ 17 ແກັດ ລວມມູນຄ່າ 48.4 ລ້ານກີບ; ເຄື່ອງຈາກມູນນິທິພົງສະຫວັນ ປະກອບມີ: ເຂົ້າສານ 10 ກະສອບ, ໝີ່ 37 ກ່ອງ, ຖົງຢັ້ງຊີບ 30 ຖົງ, ປາກະປ໋ອງ 5 ກ່ອງ, ເຄື່ອງນຸ່ງມືສອງຈຳນວນໜຶ່ງ ມູນຄ່າ 20 ລ້ານກີບ; ເຄື່ອງຈາກ ຄຳຫຼ້າການຄ້າດອນໝູນ, ໂຮງແຮມ ລາວເທວ, ບໍລິສັດ ຄິງ ຂາອອກ-ຂາເຂົ້າ ບໍລິການສິນຄ້າຜ່ານແດນ ຈຳກັດ ແລະ ກູ້ໄພນະຄອນຫຼວງ 1624 ປະກອບມີ: ຜ້າຫົ່ມ 300 ຜືນ, ໝອນນອນ 200 ໜ່ວຍ, ສາດ 200 ຜືນ, ຖົງຢັ້ງຊີບ 120 ຖົງ ລວມມູນຄ່າ 47.69 ລ້ານກີບ. ເຊິ່ງມູນຄ່າລວມທັງໝົດໃນການຊ່ວຍຄັ້ງນີ້ 606,495,000 ກີບ (ຫົກຮ້ອຍຫົກລ້ານສີ່ຮ້ອຍເກົ້າສິບຫ້າພັນກີບ).

ຈາກນັ້ນ, ຄະນະຍັງໄດ້ເດີນທາງໄປເບິ່ງຕົວຈິງບ່ອນທີ່ຖືກນ້ຳຖ້ວມ ແລະ ມອບເຄື່ອງຊ່ວຍເຫຼືອໃຫ້ພໍ່ແມ່ປະຊາຊົນຜູ້ປະສົບໄພຢູ່ບ້ານນາລິວ ແລະ ບ້ານມີສຸກ ເມືອງຊຳເໜືອ ເຊິ່ງເປັນ 2 ບ້ານທີ່ຖືກຜົນກະທົບໜັກ.

**(ກົງທະນູຄຳ ພິພັດເສລີ)**




## ແຂວງຄຳມ່ວນ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນເຊົ້າວັນທີ 1 ຕຸລານີ້ ທີ່ສະພາແຫ່ງຊາດ, ທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງຄຳມ່ວນພ້ອມດ້ວຍຄະນະ ໄດ້ນຳເງິນສົດ 1 ຕື້ກີບ ແລະ ເສື້ອ 500 ຜືນ ລວມມູນຄ່າ 1 ຕື້ກວ່າກີບ ມາມອບໃຫ້ສະພາແຫ່ງຊາດ ເພື່ອປະກອບສ່ວນສະໜັບສະໜູນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງກ່າວຮັບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ, ການມອບ-ຮັບຄັ້ງນີ້ມີທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດພ້ອມດ້ວຍຕາງໜ້າທັງສອງຝ່າຍເຂົ້າຮ່ວມເປັນສັກຂີພະຍານ.

ໂອກາດດັ່ງກ່າວ, ທ່ານປະທານສະພາແຫ່ງຊາດ ໄດ້ກ່າວຄຳຂອບໃຈຕໍ່ແຂວງຄຳມ່ວນທີ່ໄດ້ປະກອບສ່ວນສະໜັບສະໜູນກອງປະຊຸມຄັ້ງນີ້ ແລະ ໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ແຂວງຄຳມ່ວນອີກດ້ວຍ.

**(ນາງ ສຸມິນທາ ງາໄຊ)**

# ເຝິກນຳໃຊ້ລະບົບຈັດເກັບ ແລະ ສະໜອງຂໍ້ມູນ




(ສພຊ) - ວັນທີ 1 ຕຸລາ ນີ້ ທີ່ສະພາແຫ່ງຊາດ, ອະນຸກຳມະການເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ສື່ມວນຊົນ (ຕຂສມຊ) ໄດ້ຈັດກອງປະຊຸມເຝິກອົບຮົມການນຳໃຊ້ລະບົບຈັດເກັບແລະສະໜອງຂໍ້ມູນຮ່ວມກັນ (G-share, G-Drive) ໃຫ້ແກ່ພະນັກງານໃນອະນຸກຳມະການຕ່າງໆ ຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ຫົວໜ້າອະນຸກຳມະການ ຕຂສມຊ ເຊິ່ງວິທະຍາກອນຈາກສູນບໍລິຫານລັດດິຈິຕອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສະເໜີບົດຮຽນການນຳໃຊ້ລະບົບການຈັດເກັບ ແລະ ນຳໃຊ້ຂໍ້ມູນຮ່ວມກັນຂອງພາກລັດ, ບົດຮຽນກ່ຽວກັບການຕິດຕັ້ງແອັບພລິເຄຊັນ G-share ແລະ G-Drive ຜ່ານທາງໂທລະສັບມືຖືສະມາດໂຟນ ແລະ ແທັບເລັດ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ສົນທະນາແລກປ່ຽນບົດຮຽນ ພ້ອມທັງເຝິກປະຕິບັດຕົວຈິງ.

ການເຝິກອົບຮົມຄັ້ງນີ້ ກໍເພື່ອຈັດຕັ້ງຜັນຂະຫຍາຍແຜນການກະກຽມ ແລະ ຮັບໃຊ້ການເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45 ຂອງຄະນະກຳມະການລະດັບຊາດ ກໍຄືແຜນການຂອງອະນຸກຳມະການເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ສື່ມວນຊົນ ໂດຍສະເພາະວຽກງານການເກັບກຳ ແລະ ສະໜອງຂໍ້ມູນຮ່ວມກັນລະຫວ່າງອະນຸກຳມະການຕ່າງໆ ໃຫ້ບັນລຸຜົນສຳເລັດຕາມແຜນການວາງໄວ້ ທັງເຮັດໃຫ້ບັນດາພະນັກງານຂອງອະນຸກຳມະການຕ່າງໆ ມີຄວາມເຂົ້າໃຈເລິກເຊິ່ງ ສາມາດສະໜອງຂໍ້ມູນເອກະສານເຊິ່ງກັນແລະກັນ ມີຄວາມວ່ອງໄວ ແລະ ທັນສະໄໝ.

**(ກົງທະນູຄຳ ພິພັດເສລີ)**

# ຮອງປະທານ ກສຕສ ຕິດຕາມກວດກາການຂະຫຍາຍພື້ນຖານໂຄງລ່າງຢູ່ໄຊສົມບູນ




(ສພຂ) - ທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ແລະ ການພັດທະນາຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນເຊື່ອມຈອດເຂົ້າສູ່ແລວທາງເສດຖະກິດ ຢູ່ແຂວງໄຊສົມບູນ ເມື່ອວັນທີ 20 ກັນຍາຜ່ານມາ ໂດຍໄດ້ຈັດກອງປະຊຸມເພື່ອຕິດຕາມກວດກາວຽກງານດັ່ງກ່າວ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ພາຍໃຕ້ການເປັນປະທານຂອງທ່ານຮອງປະທານ ກສຕສ ໂດຍມີທ່ານ ຄຳພູທອນ ວົງພະຈັນ ຮອງປະທານ ສພຂ ພ້ອມດ້ວຍບັນດາພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ, ຜູ້ປະກອບການຂົນສົ່ງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ປອ. ເກດແກ້ວ ສີຫາລາດ ໄດ້ມີຄຳເຫັນແລະຄຳຖາມເຈາະຈີ້ມກ່ຽວກັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນຕົວຈິງໃນການຈັດຕັ້ງປະຕິບັດງົບປະມານລົງທຶນປີ 2024 ເຂົ້າໃນການກໍ່ສ້າງ ແລະ ສ້ອມແປງບັນດາໂຄງການພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ເປັນຕົ້ນ: ດ່ານສາກົນ, ເສັ້ນທາງ, ຂົວຕາມບັນດາເສັ້ນທາງສາຍຫຼັກຢູ່ທ້ອງຖິ່ນຕ່າງໆ ໃນການເຊື່ອມຈອດກັບພາກພື້ນແລະການອຳນວຍຄວາມສະດວກດ້ານການຂົນສົ່ງສິນຄ້າ ແລະ ໂດຍສານ ພ້ອມທັງຮອງຮັບໃຫ້ແກ່ການເປີດປີທ່ອງທ່ຽວລາວ ປີ 2024; ນອກນີ້ ກໍເພື່ອເກັບກຳຂໍ້ມູນຕົວຈິງຕໍ່ການຮ້ອງທຸກຂອງສະມາຄົມລົດຂົນສົ່ງພາຍໃນທີ່ມີຜົນກະທົບຕໍ່ການດຳເນີນກິດຈະການ ແລະ ຕິດຕາມສະພາບຕົວຈິງຂອງລົດຂົນສົ່ງຕ່າງປະເທດທີ່ມາດຳເນີນການຂົນສົ່ງຢູ່ແຕ່ລະທ້ອງຖິ່ນ ກໍຄືແຂວງໄຊສົມບູນ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ຊຸກຍູ້ສົ່ງເສີມ ແລະ ດ້ານອ່ອນ, ຂໍ້ຄົງຄ້າງທີ່ຈະຕ້ອງຊອກຫາວິທີການແກ້ໄຂ ແນໃສ່ເຮັດໃຫ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ຖືກ

ອ່ານຕໍ່ໜ້າ 12

# ສ້າງພະນັກງານກົມເລຂານຸການເປັນຄູເຝິກ



(ສພຊ) - ກອງປະຊຸມເຝິກອົບຮົມວຽກງານການສ້າງເປັນຄູເຝິກໃຫ້ແກ່ພະນັກງານ-ລັດຖະກອນພາຍໃນກົມເລຂານຸການ, ຄະນະເລຂາທິການສະພາແຫ່ງຊາດ (ຄລສ) ພາຍໃຕ້ການເປັນປະທານຂອງທ່ານ ຄຳສະໄໝ ສຳມາວົງ ຫົວໜ້າກົມເລຂານຸການ ເຊິ່ງມີວິທະຍາກອນຈາກກະຊວງພາຍໃນເຂົ້າຮ່ວມ. ຈຸດປະສົງການເຝິກອົບຮົມແມ່ນເພື່ອຍົກສູງບົດບາດ, ໜ້າທີ່ຮັບຜິດຊອບ, ຄວາມຮູ້ ແລະ ຄວາມສາມາດ ແນໃສ່ປັບປຸງຄຸນນະພາບການເຄື່ອນໄຫວວຽກງານ ໂດຍສະເພາະການເປັນເສນາທິການໃຫ້ແກ່ ຄລສ ມີປະສິດທິພາບ ແລະ ປະສິດທິຜົນເພີ່ມຂຶ້ນ, ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ແລະ ສອດຄ່ອງຕາມລະບຽບຫຼັກການ; ເພື່ອຍົກລະດັບຄວາມຮູ້, ຮັດແໜ້ນຄວາມເຂົ້າໃຈ ແລະ ທັກສະດ້ານຕ່າງໆ ເພື່ອກະກຽມຄວາມພ້ອມໃນການເປັນຄູເຝິກວຽກງານການເປັນເສນາທິການດ້ານເນື້ອໃນໃຫ້ແກ່ກອງປະຊຸມສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ເຊິ່ງກວມເອົາບັນດາຫຼັກການພື້ນຖານ ແລະ ທັກສະຈຳເປັນໃນການເປັນຄູເຝິກ ລວມທັງການອອກແບບ, ການຈັດຕັ້ງປະຕິບັດ ແລະ ການປະເມີນການເຝິກອົບຮົມ ທັງເປັນການຖອດຖອນບົດຮຽນ ແລະ ສົນທະນາແລກປ່ຽນຄວາມຄິດເຫັນໃນຂະບວນການເຄື່ອນໄຫວວຽກງານຕົວຈິງສົມທຽບກັບທິດສະດີ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີຫົວຂໍ້: ການຮຽນວິເຄາະຄວາມຕ້ອງການໃນການເຝິກອົບຮົມ; ຫຼັກການການຮຽນຮູ້ແບບຜູ້ໃຫຍ່; ການວາງແຜນການສອນ; ບົດບາດການເປັນຄູເຝິກ; ການສ້າງຄວາມໝັ້ນໃຈຂອງການເປັນຄູເຝິກ; ທັກສະໃນການເວົ້າ, ການຟັງ, ການສັງເກດ ແລະ ການສື່ສານໃນການເຝິກອົບຮົມ. ຈາກນັ້ນ, ໄດ້ຈັດແບ່ງກຸ່ມເພື່ອຄົ້ນຄວ້າເຮັດບົດເຝິກຫັດ, ທົດລອງຂຶ້ນນຳສະເໜີບົດຕົວຈິງ ໃຫ້ທີມງານຄູເຝິກມີຄຳຄິດຄຳເຫັນຕໍ່ບົດຕ່າງໆ ເພື່ອໃຫ້ນັກເຝິກອົບຮົມໄປປັບປຸງແກ້ໄຂບົດຂອງຕົນເອງ ໃຫ້ມີເນື້ອໃນທີ່ຖືກຕ້ອງຕາມຫຼັກການ ແລະ ມີຄຸນນະພາບ.

ທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ໄດ້ມີຄຳເຫັນວ່າ: ກົມເລຂານຸການເປັນເສນາທິການດ້ານເນື້ອໃນ, ວຽກງານກະກຽມກອງປະຊຸມ ລວມເຖິງການສ້າງນິຕິກຳຕ່າງໆ ທີ່ພົວພັນກັບການເຄື່ອນໄຫວປະສານງານ ແລະ ຮັບໃຊ້ການນຳສະພາແຫ່ງຊາດ. ດັ່ງນັ້ນ, ພະນັກງານພາຍໃນກົມຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າແນວທາງນະໂຍບາຍ, ກົດໝາຍ, ນິຕິກຳຕ່າງໆທີ່ກ່ຽວຂ້ອງ ລວມທັງການກຳນົດ ແລະ ຈັດຕັ້ງຜັນຂະຫຍາຍບັນດາແຜນການ-ແຜນງານ, ໂຄງການຕ່າງໆ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້; ນອກນັ້ນ, ກໍຕ້ອງໄດ້ເອົາໃຈໃສ່ກະກຽມຮອບດ້ານແຕ່ຫົວທີ ເປັນຕົ້ນການສ້າງແຜນການ, ບົດລາຍງານຂໍທິດຊີ້ນຳດ້ານເນື້ອໃນ, ການຮ່າງມະຕິດຳເນີນກອງປະຊຸມ, ແຈ້ງການຫາພາກສ່ວນຕ່າງໆກະກຽມເນື້ອໃນ, ເຮັດວຽກງານຮ່ວມກັບພາກສ່ວນກ່ຽວຂ້ອງ ແລະ ກະກຽມບັນດາເອກະສານສຳຄັນໃຫ້ສຳເລັດ.

ການເຝິກອົບຮົມຄັ້ງນີ້ ຈັດຂຶ້ນໃນວັນທີ 27-29 ກັນຍາຜ່ານມາ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ເຊິ່ງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງ ຄລສ.

**(ອານຸສອນ ພູມມີທອນ)**

# ກອງປະຊຸມຄະນະປະຈຳກຳມາທິການວັດທະນະທຳ-ສັງຄົມ APA ທີ່ລັດເຊຍ



(ສພຊ) - ວັນທີ 24-29 ກັນຍາ 2024 ທ່ານ ປອ. ກໍລະກັນ ພົມມະວົງ ກຳມະການປະຈຳກຳມາທິການວັດທະນະທຳ-ສັງຄົມ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຄະນະປະຈຳກຳມາທິການວັດທະນະທຳ-ສັງຄົມຂອງລັດຖະສະພາອາຊີ (Asian Parliamentary Assembly-APA) ຢູ່ນະຄອນຫຼວງມົດສະກູ, ສະຫະພັນລັດເຊຍ ເຊິ່ງເປັນເຈົ້າພາບຈັດໂດຍສະພາດູມາ (ສະພາຕ່ຳລັດເຊຍ).

ກອງປະຊຸມຄັ້ງນີ້ ພາຍໃຕ້ການເປັນປະທານຂອງທ່ານ ໂບລິສ ເຊີນີຊອບ (Boris CHERNYSHOV) ຮອງປະທານຄະນະປະຈຳສະພາດູມາໂດຍມີຜູ້ແທນຕາງໜ້າ 16 ປະເທດ ຈາກພາກພື້ນອາຊີເຂົ້າຮ່ວມ ຄື: ອາແຊກໄບຊານ, ບາເຣນ, ກຳປູເຈຍ, ຈີນ, ອີຣານ, ອີຣັກ, ກຽກກິດສະຖານ, ລາວ, ປາແລດສະຕິນ, ປາກິດສະຖານ, ກາຕາ, ລັດເຊຍ, ຕັດຈິກິດສະຖານ, ຕວັກກີ, ສະຫະລັດ ອາຣັບ ເອມີເຣດ, ແລະ ຫວຽດນາມ ພ້ອມດ້ວຍບັນດາແຂກຂອງປະເທດເຈົ້າພາບ ເຊິ່ງໄດ້ປຶກສາຫາລື ແລະ ພິຈາລະນາເນື້ອໃນຮ່າງມະຕິກ່ຽວກັບຂົງເຂດກຳມາທິການວັດທະນະທຳ-ສັງຄົມ ເປັນຕົ້ນ ການສົ່ງເສີມຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ປົກປັກຮັກສາມໍລະດົກອາຊີ, ການທ່ອງທ່ຽວ, ການເຊື່ອມໂຍງ, ສຸຂະພາບ, ຊັບພະຍາກອນມະນຸດ, ການຕ້ານການສໍ້ລາດບັງຫຼວງ, ການສົ່ງເສີມຊາວໜຸ່ມແມ່ຍິງແລະເດັກນ້ອຍ, ແລະ ອື່ນໆ ລວມທັງໝົດ 14 ຮ່າງມະຕິ.

ຄະນະຜູ້ແທນທັງໝົດ ໄດ້ມີໂອກາດຢ້ຽມຢາມພື້ນຖານການພັດທະນາເສດຖະກິດ-ສັງຄົມ ໂດຍການທັດສະນະສຶກສາການພັດທະນານະວັດຕະກຳອັນທັນສະໄໝ, ລະບົບການເລືອກຕັ້ງອອນລາຍຂອງລັດເຊຍ ແລະ ທ່ຽວຊົມພະລາຊະວັງເກົ່າແກ່ແກຣມແລງ (Kremlin); ພ້ອມດຽວກັນນີ້, ຍັງໄດ້ວາງດອກໄມ້ໃຫ້ແກ່ນັກຮົບນິລະນາມຢູ່ຂ້າງກຳແພງພະລາຊະວັງດັ່ງກ່າວອີກດ້ວຍ.

# ສພຂ ຜົ້ງສາລີ ເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິຂອງສູນກາງພັກ




(ສພຂ) - ໃນວັນທີ 13 ກັນຍາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິຂອງສູນກາງພັກ, ເນື້ອໃນສຳຄັນແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊະຕາກຳ ລາວ-ຈີນ ປີ 2024-2028 ແລະ ມະຕິຂອງ ຄະນະພັກ, ອົງການປົກຄອງແຂວງ ໂດຍການເປັນປະທານຂອງສະຫາຍ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຜົ້ງສາລີ, ເຂົ້າຮ່ວມມີ ກຳມະການພັກແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ມີຄະນະໜ່ວຍພັກ ແລະ ສະມາຊິກພັກ, ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນກອງປະຊຸມໄດ້ຮັບຟັງສະຫາຍ ທຸມເພັງ ຈອມວິສານ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເຜີຍແຜ່ ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ XI, ມະຕິກອງປະຊຸມຄົບຄະນະຄັ້ງທີ 9 ຂອງຄະນະບໍລິຫານງານພັກແຂວງ ສະໄໝທີ XI; ຮັບຟັງສະຫາຍ ນາງ ພອນສະຫວັນ ສັກຕິຄຸນ ເລຂາໜ່ວຍພັກສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ ເຜີຍແຜ່ມະຕິກອງປະຊຸມອົງການປົກຄອງແຂວງເປີດກວ້າງ ຄັ້ງທີ 8 ສະໄໝທີ IX; ຮັບຟັງສະຫາຍ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເຜີຍແຜ່ບາງເນື້ອໃນສຳຄັນຂອງແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊະຕາກຳ ລາວ-ຈີນ ປີ 2024-2028. ນອກຈາກນີ້, ໃນຕອນທ້າຍປະທານກອງປະຊຸມຕາງໜ້າຄະນະພັກຂັ້ນເທິງ ໄດ້ໃຫ້ກຽດໂອ້ລົມແລະມີທິດຊີ້ນຳ, ພ້ອມທັງໄດ້ເນັ້ນໃຫ້ບັນດາສະມາຊິກພັກ, ພະນັກງານຫຼັກແຫຼ່ງ ຕະຫຼອດຮອດພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງສືບຕໍ່ເຊື່ອມຊຶມບັນດາເອກະສານທີ່ໄດ້ເຜີຍແຜ່ໃນຄັ້ງນີ້ ໃຫ້ມີຄວາມເຂົ້າໃຈຢ່າງລະອຽດ ເລິກເຊິ່ງ ຂຶ້ນຕື່ມ ເພື່ອເຮັດສາມາດໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໄດ້ຢ່າງມີປະສິດທິຜົນ.

**(ສູນທອງ)**

# ສພຂ ຫຼວງພະບາງ ພົບປະຜູ້ມີສິດເລືອກຕັ້ງ



(ສພຂ) - ໃນລະຫວ່າງວັນທີ 3-10 ກັນຍາ ຜ່ານມານີ້, ທ່ານ ສົມມາລີ ຄຳເກັ່ງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ຄະນະປະຈຳສະພາປະຊາຊົນແຂວງ, ເລຂາພັກເມືອງເຈົ້າເມືອງພູຄູນ, ທ່ານ ອຸ່ນ ດວງມະນີ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນານ, ໄດ້ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຢູ່ເມືອງວຽງຄຳ, ເມືອງນານ ແຂວງຫຼວງພະບາງ ເມືອງພູຄູນລວມມີ 5 ຈຸດ ກວມເອົາ 5 ບ້ານຄື: ບ້ານສາມສຸມ, ບ້ານດອນແກ້ວ, ບ້ານສາມຕົ້ນ, ບ້ານໃຫຍ່ວຽງຄຳແລະບ້ານກິ່ວໄລ; ສ່ວນເມືອງນານມີ 4 ຈຸດ, ລວມມີ 5 ບ້ານຄື: ບ້ານສີມຸງຄຸນ, ບ້ານປ່າເພີ່ມ, ບ້ານໂພນ, ບ້ານຫ້ວຍແມະ ແລະ ບ້ານຫ້ວຍສະລາ ເຂົ້າຮ່ວມຮັບຟັງການເຜີຍແຜ່ຢູ່ແຕ່ລະຈຸດ ມີການນຳຂອງເມືອງ, ເລຂາພັກບ້ານ, ນາຍບ້ານ, ອຳນາດການປົກຄອງບ້ານ, ເຖົ້າແກ່ແນວໂຮມບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າເຂົ້າຮ່ວມຢ່າງພ້ອມພຽງ.

ການລົງເຜີຍແຜ່ຄັ້ງນີ້; ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ຈາກອຳນາດການປົກຄອງແຕ່ລະບ້ານ ໂດຍປະຊາຊົນສ່ວນໃຫຍ່ແມ່ນມີອາຊີບ ການບໍລິການຄ້າຂາຍ, ປູກຝັງ ແລະ ລ້ຽງສັດເປັນອາຊີບຕົ້ນຕໍ, ຫຼັງຈາກນັ້ນ ທ່ານກໍໄດ້ນຳເອົາເນື້ອໃນຈິດໃຈຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ມາເຜີຍແຜ່ ເປັນຕົ້ນ: ວຽກງານຂົງເຂດລັດຖະບານ, ວຽກງານອົງການກວດສອບແຫ່ງລັດ, ວຽກງານສະພາແຫ່ງຊາດ, ວຽກງານສ້າງ ແລະ ປັບປຸງກົດໝາຍ ຈຳນວນ 13 ສະບັບ ແລະ ວຽກບຸຄະລາກອນທີ່ກອງປະຊຸມສະພາແຫ່ງຊາດໄດ້ຮັບຮອງເອົາຢູ່ໃນກອງປະຊຸມມາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈແຈ້ງ ເພື່ອໃຫ້ປະຊາຊົນນຳໄປຈັດຕັ້ງປະຕິບັດ ເຂົ້າໃນພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນເປັນກ້າວໆ; ຄຽງຄູ່ກັນນັ້ນ ຍັງໄດ້ຮັບຟັງຄຳຄິດ, ຄຳສະເໜີຂອງພໍ່ແມ່ປະຊາຊົນ; ໃນໂອກາດດັ່ງກ່າວແຕ່ລະທ່ານໄດ້ຮຽກຮ້ອງໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ໃຫ້ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ເປັນເຈົ້າການໃນການສຶກສາອົບຮົມລູກຫຼານໃຫ້ເປັນພົນລະເມືອງດີ, ພ້ອມກັນປະຕິບັດຕາມແຜນພັດທະນາຂອງບ້ານວາງອອກໃຫ້ໄດ້ຮັບຜົນດີ, ເອົາໃຈໃສ່ເສີມຂະຫຍາຍການຜະລິດສິນຄ້າກະສິກຳ, ປູກຝັງ ລ້ຽງສັດ ແລະ ອື່ນໆ ທີ່ເປັນທ່າແຮງຂອງບ້ານໃຫ້ຫຼາຍກາຍເປັນສິນຄ້າ ເພື່ອທົດແທນການນຳເຂົ້າ, ສົ່ງເສີມການສົ່ງອອກໃຫ້ໄດ້ຫຼາຍ ແລະ ມີຕະຫຼາດຮອງຮັບ, ເພື່ອໃຫ້ແຕ່ລະຄອບຄົວມີລາຍຮັບສູງຂຶ້ນແລະຊີວິດການເປັນຢູ່ທີ່ດີຂຶ້ນໄປເລື້ອຍໆ, ການລົງເຜີຍແຜ່ຄັ້ງນີ້ ທ່ານຍັງໄດ້ນຳເອົາວັດຖຸປັດໄຈເປັນເງິນສົດຈຳນວນ 8 ລ້ານກີບ ໄປມອບໃຫ້ເມືອງວຽງຄຳ ເພື່ອນຳໄປຊ່ວຍເຫຼືອພໍ່ແມ່ປະຊາຊົນທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ ອີກດ້ວຍ.

**(ຂ່າວ: ທຸມພັນ ອຳພອນ ແລະ ອານຸນ ຈັນທະມາໄລ)**

# ມອບເຄື່ອງຊ່ວຍເຫຼືອໄພນ້ຳຖ້ວມ ແລະ ຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ ຢູ່ເມືອງຫຼວງນ້ຳທາ




(ສພຂ) - ນ້ຳຖ້ວມແຂວງຫຼວງນ້ຳທາ ເຮັດໃຫ້ປະຊາຊົນຈຳນວນຫຼາຍບ້ານໄດ້ຮັບຜົນກະທົບທັງຊັບສິນມີຄ່າ, ຜົນຜະລິດ, ສັດລ້ຽງ, ລົດລາງພາຫະນະຕ່າງໆ ລະຫວ່າງວັນທີ 21-21 ກັນຍາ 2024, ທ່ານແກ້ວຈະເລີນເຊ່ຍຢົ້ງຢ່າງ ສະມາຊິກສະພາແຫ່ງຊາດ ຮອງປະທານກຳມາທິການບັນດາເຜົ່າແລະບໍລິສັດຮ່ວມໃຈອອກແບບ ແລະ ກໍ່ສ້າງເຄຫາສະຖານສາກົນ ຈຳກັດ ໄດ້ມອບເຄື່ອງຊ່ວຍເຫຼືອ ແກ່ຜູ້ປະສົບໄພນ້ຳຖ້ວມຢູ່ແຂວງຫລວງນ້ຳທາ ປະກອບມີເຂົ້າສານ, ອາຫານແຫ້ງ, ເຄື່ອງນຸ່ງຫົ່ມ ແລະ ເງິນສົດຈຳນວນໜຶ່ງ ລວມມູນຄ່າ 130,000,000 ກີບ (ຮ້ອຍສາມສິບລ້ານ) ໂດຍຕາງໜ້າການນຳຂອງແຂວງຮັບເຄື່ອງຊ່ວຍເຫຼືອຄັ້ງນີ້ແມ່ນ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ.

ໂອກາດນີ້ ທ່ານຄຳຟອງ ອິນມານີ ຕາງໜ້າການນຳຂອງແຂວງກໍຄືສະພາປະຊາຊົນແຂວງ ໄດ້ກ່າວສະແດງຄວາມຂອບໃຈ ແລະຍ້ອງຍໍຊົມເຊີຍມາຍັງທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຕາງໜ້າສະມາຊິກສະພາແຫ່ງຊາດໜຸ່ມ ພ້ອມດ້ວຍບໍລິສັດຮ່ວມໃຈ ອອກແບບ ແລະ ກໍ່ສ້າງເຄຫາສະຖານສາກົນ ຈຳກັດ ທີ່ໄດ້ເປັນຫ່ວງເປັນໄຍ ແລະ ໄດ້ລະດົມທຶນຊ່ວຍເຫລືອຜູ້ທີ່ຖືກຜົນກະທົບໄພນ້ຳຖ້ວມໃນຄັ້ງນີ້.

ໃນວັນດຽວກັນ ທ່ານແກ້ວຈະເລີນ ເຊ່ຍຢົ້ງຢ່າງ ແລະ ທ່ານ ນາງ ເກສອນ ແສງຍະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ປະທານຄະນະກຳມາການວັດທະນາທຳ-ສັງຄົມ ແລະບັນດາເຜົ່າສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ຍັງໄດ້ນຳເອົາເຄື່ອງຊ່ວຍເຫລືອດັ່ງກ່າວລົງມອບໃຫ້ປະຊາຊົນຜູ້ທີ່ຖືກຜົນກະທົບຈາກໄພພິບັດນ້ຳຖ້ວມຢູ່ 4 ບ້ານ ຄື: ບ້ານຫາດຍາວ ຈຳນວນ 15 ຄອບຄົວ, ບ້ານຕາຫວ່ານ 91 ຄອບຄົວ, ບ້ານຫ້ວຍຂິງ 25 ຄອບຄົວ ແລະ ບ້ານທ່າອໍ້ 92 ຄອບຄົວ ແລະ ບ້ານນ້ຳດີ 12 ຄອບຄົວ ທັງນີ້, ກໍເພື່ອເປັນການໃຫ້ກຳລັງໃຈແລະບັນເທົາທຸກເບື້ອງຕົ້ນ ໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບ ແລະ ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອຕື່ມອີກໃນຫຼາຍບ້ານ ທີ່ປະສົບໄພທີ່ໄດ້ຮັບຜົນເສຍຫຼາຍໃນຄັ້ງນີ້ ໃຫ້ທົ່ວເຖິງ.

ແລະເພື່ອປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ ໃນການລົງຕິດຕາມກວດກາ ໃນວັນທີ 30 ກັນຍາ 2024 ນີ້ ສະພາປະຊາຊົນແຂວງຫຼວງນ້ຳທາ ນຳໂດຍທ່ານ ຄຳພອນ ເຕີນຈະເລີນ ສະມາຊິກສະພາປະຊາຊົນແຂວງ ປະທານຄະນະກຳມະການເສດຖະກິດ, ແຜນການແລະການເງິນ ພ້ອມດ້ວຍຄະນະ ໄດ້ລົງຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ກ່ຽວກັບໂຄງການລົງທຶນຂອງລັດແລະເອກະຊົນຢູ່ເມືອງຫລວງນ້ຳທາ; ໄດ້ຈັດກອງປະຊຸມຮ່ວມຢູ່ທີ່ຫ້ອງວ່າການປົກຄອງເມືອງຫລວງນ້ຳທາ ມີຮອງເຈົ້າເມືອງ, ບັນດາຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງລາຍງານໂດຍຫຍໍ້ສະພາບລວມການຈັດຕັ້ງປະຕິບັດບັນດາໂຄງການ ແລະ ຜົນໄດ້ຮັບຈາກໂຄງການໃນໄລຍະຜ່ານມາ ຂອງເມືອງຫຼວງນ້ຳທາ; ຮັບຟັງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ເອກະຊົນ ແລະ ການນຳໃຊ້ເງິນເກີນແຜນຢູ່ພາຍໃນເມືອງ ປະຈຳປີ 2023 ແລະ ຮັບຟັງສະພາບການຈັດຕັ້ງປະຕິບັດໂຄງການກອງທຶນທາງຂອງເມືອງ ໃນໄລຍະຜ່ານມາ ແລະ ຮັບຟັງຕາມຄຳຖາມເຈາະຈີ້ມຂອງຄະນະກຳມະການເປັນຕົ້ນ: ສະພາບເງິນເຟີ້ມີຜົນກະທົບຕໍ່ໂຄງການລົງທຶນຂອງລັດ, ວິທີແກ້ໄຂແນວໃດໃນໄລຍະຜ່ານມາ ແລະຜົນກະທົບໂຄງການຕໍ່ສິ່ງແວດລ້ອມແນວໃດ ນອກນັ້ນ ຍັງໄດ້ຮັບຟັງບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງທີ່ຮັບຜິດຊອບໂຄງການລົງທຶນຂອງລັດ ໃນການຈັດຕັ້ງປະຕິບັດໂຄງການມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຄວາມຄືບໜ້າຂອງໂຄງການແນວໃດ; ພ້ອມດຽວກັນ ຜູ້ແທນກອງປະຊຸມຢູ່ບັນດາເມືອງຍັງໄດ້ສະເໜີບັນຫາທີ່ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ໄດ້ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາທັງນີ້ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ, ເອກະຊົນພາຍໃນເມືອງ ໃຫ້ມີຄວາມສະດວກ, ມີຄວາມຄືບໜ້າ ສາມາດຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ ແລະ ສຳເລັດຕາມລະດັບຄາດໝາຍ; ຈາກນັ້ນ ຍັງໄດ້ລົງຕິດຕາມກວດກາລົງພື້ນທີ່ຕົວຈິງຂອງບັນດາໂຄງການລົງທຶນຂອງລັດ ຢູ່ບ້ານນ້ຳແງ້ນ, ເມືອງຫລວງນ້ຳທາ.

ກອງປະຊຸມຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ (STEPS).

**(ນາງ ວັນນີ ແຝງບົວວັນ)**

# ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາ ແລະ ຜູ້ຊ່ວຍວຽກ




(ສພຂ)- ໃນວັນທີ 17-18 ກັນຍາ 2024; ທີ່ຫ້ອງປະຊຸມຫ້ອງວ່າການເມືອງຄຳເກີດ ແຂວງບໍລິຄຳໄຊ ໂດຍການເປັນປະທານ ຂອງທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີ ທ່ານ ສີງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ວິທະຍາກອນຈາກສະພາແຫ່ງຊາດ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຄະນະນຳຂອງເມືອງແລະພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ,ສະມາຊິກສະພາປະຊາຊົນ ແຂວງ, ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ແລະ ຜູ້ຊ່ວຍວຽກສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ກ່ຽວກັບການສ້າງບົດສັງລວມຄຳເຫັນ, ບົດໂອ້ລົມ, ການອະທິບາຍຊີ້ແຈງຕໍ່ຄຳສະເໜີຂອງປະຊາຊົນ,ການຄົ້ນຄວ້າ ປະກອບຄຳຄິດເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມແລະການຕິດຕາມກວດກາຜົນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການລົງທຶນ ໃນຂົງເຂດເສດຖະກິດ.

ກອງປະຊຸມ ໄດ້ຮັບຟັງການສະເໜີ ຫົວຂໍ້: ບົດຮຽນ ແລະ ວິທີການສັງລວມຄຳສະເໜີຂອງປະຊາຊົນ,ການອະທິບາຍຊີ້ແຈງຕໍ່ຄຳສະເໜີຂອງປະຊາຊົນ ໃນໂອກາດລົງພົບປະປະຊາຊົນ ເປັນຕົ້ນ: ແມ່ນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນໃນແຕ່ລະຄັ້ງ; ບົດຮຽນໃນການສ້າງຄຳຖາມເຈາະຈີ້ມ, ບົດສັງລວມຄຳເຫັນ ໃຫ້ປະທານກອງປະຊຸມ; ເຕັກນິກໃນການຕິດຕາມກວດກາ ແລະ ການຕິດຕາມຜົນການປະເມີນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ໂຄງການລົງທຶນ ໃນຂົງເຂດເສດຖະກິດ ແລະ ບົດຮຽນການຄົ້ນຄວ້າ, ວິເຄາະ, ວິໃຈ, ການປະກອບຄຳເຫັນ ແລະ ການຊັກຖາມ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂອງລັດ ແລະ ແຜນງົບປະມານຂອງລັດ ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ສຸມໃສ່ຄົ້ນຄວ້າ ປະກອບຄຳຄິດຄຳເຫັນຍາດແຍ່ງເອົາບົດຮຽນ ແລະ ປະສົບການ ຈາກບັນດານັກວິທະຍາກອນເພື່ອນຳໄປພິຈາລະນາປັບປຸງໃນຕໍ່ໜ້າໃຫ້ແທດເໝາະ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງຍິ່ງຂຶ້ນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນດ້ານງົບປະມານໂດຍ: ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ນາງ ໂສລະຢ້າ)**

# ສພຂ ໄຊຍະບູລີ ເຊື່ອມຊຶມ ແລະ ຜັນຂະຫຍາຍເອກະສານການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ

(ສພຂ) - ໃນຕອນເຊົ້າຂອງວັນທີ 23 ກັນຍາ 2024 ນີ້ ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເຜີຍແຜ່ເຊື່ອມຊຶມ ແລະຜັນຂະຫຍາຍເນື້ອໃນເອກະສານ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ແລະເອກະສານອື່ນໆ ໂດຍການເປັນກຽດເຜີຍແຜ່ ຂອງທ່ານ ນາງ ວິລະພອນ ທອງພິມ, ກຳມະການພັກແຂວງ ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ໃຫ້ກຽດເຂົ້າຮ່ວມມີປະທານ, ຮອງປະທານຄະນະກຳມະການ, ມີບັນດາຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ຕະຫຼອດຮອດພະນັກງານຫຼັກແຫຼ່ງພາຍໃນເຂົ້າຮ່ວມ.



ໃນພິທີອັນມີຄວາມໝາຍຄວາມສຳຄັນນີ້ ທ່ານ ນາງ ວັນນາ ພົມວິສອນ ເລຂາທິການສະພາປະຊາຊົນແຂວງ ໄດ້ໃຫ້ກຽດຂຶ້ນເຜີຍແຜ່ເຊື່ອມຊຶມ ແລະຜັນຂະຫຍາຍເນື້ອໃນເອກະສານກ່ຽວກັບແຈ້ງການສະບັບເລກທີ61/ພຍຂ, ລົງວັນທີ 29 ກໍລະກົດ 2024 ກ່ຽວກັບມາດຖານການຍ້ອງຍໍ ແຕ່ລະປະເພດຂັ້ນສູນກາງ, ຂັ້ນແຂວງ ແລະຂັ້ນເມືອງ; ແຈ້ງການສະບັບເລກທີ298/ຫສນຍ, ລົງວັນທີ 12 ກຸມພາ 2024 ກ່ຽວກັບການສະຫຼຸບວຽກງານຜົນການຈັດຕັ້ງປະຕິບັດຄຳສັ່ງເລກທີ 13/ນຍ, ລົງວັນທີ 29 ສິງຫາ 2023 ແລະ ດຳລັດເລກທີ 2000/ກງ ແລະ ນະໂຍບາຍງົບປະມານຂອງໂຄງການ. ຫຼັງຈາກນັ້ນ, ທ່ານ ນາງ ວິລະພອນ ທອງພິມ ໄດ້ໃຫ້ກຽດຂຶ້ນເຜີຍແຜ່ເອກະສານວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ເຊິ່ງທ່ານກ່າວວ່າ: ຄູ່ຮ່ວມຊາຕາກຳ ລາວ-ຈີນ ເປັນຄູ່ຮ່ວມຊາຕາກຳແບບພິເສດໃນຂອບການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ພິເສດຢູ່ບ່ອນວ່າ ຈີນ ແລະລາວລ້ວນແຕ່ແມ່ນປະເທດສັງຄົມນິຍົມທີ່ນຳໂດຍພັກກອມມູນິດການຢຶດໝັ້ນການນຳຂອງພັກ ແລະ ເສັ້ນທາງສັງຄົມນິຍົມ ແມ່ນທາດແທ້ຂອງສາຍພົວພັນຈີນ-ລາວ ທັງແມ່ນລັກສະນະຈະແຈ້ງຂອງການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ຊຶ່ງສອງຝ່າຍຕ້ອງຖືເອົາແຜນແມ່ບົດສະບັບໃໝ່ເປັນບ່ອນອີງໃນການຊຸກຍູ້ໃຫ້ການສ້າງຄູ່ຮ່ວມຊາຕາກຳກ້າວເຂົ້າສູ່ລວງເລິກເປັນຮູບປະທຳ ແລະເພີ່ມເນື້ອໃນໃໝ່ຂອງການພົວພັນຮ່ວມມືສອງພັກ, ສອງລັດ ລາວ-ຈີນ ໃນຕໍ່ໜ້າ. ຈຸດປະສົງການເຜີຍແຜ່ໃນຄັ້ງນີ້ກໍເພື່ອສຶກສາອົບຮົມກ່ຽວກັບສາຍພົວພັນມິດຕະພາບ ແລະການຮ່ວມມືທີ່ມີມາດົນນານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ເຊິ່ງເປັນປັດໄຈສຳຄັນອັນໜຶ່ງຄໍ້າປະກັນຜົນສຳເລັດຂອງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດເຮົາໃນປັດຈຸບັນ ແລະ ອະນາຄົດ. ເພື່ອສ້າງຄວາມຮັບຮູ້ຢ່າງຖືກ ຕ້ອງກ່ຽວກັບຄວາມໝາຍສຳຄັນ ແລະ ເນື້ອໃນຂອງການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ຄືການຊຸກຍູ້ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ດຳເນີນໄປຢ່າງໝັ້ນທ່ຽງ ແລະຍາວນານ ບົນພື້ນຖານຢຶດໝັ້ນການເຄົາລົບ ແລະ ໄວ້ເນື້ອເຊື່ອໃຈກັນທາງການເມືອງມີຜົນປະໂຫຍດຮ່ວມກັນທາງດ້ານເສດຖະກິດຊ່ວຍເຫຼືອ ແລະ ປົກປ້ອງກັນທາງດ້ານຄວາມໝັ້ນຄົງເຂົ້າໃຈ ແລະ ໃກ້ຊິດກັນທາງດ້ານວັດທະນະທຳ-ສັງຄົມຢູ່ຮ່ວມກັນ ແລະ ຄຸ້ມຄອງຮ່ວມກັນທາງດ້ານລະບົບນິເວດ ແລະ ສິ່ງແວດລ້ອມ ພ້ອມກັນສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໃຫ້ມີມາດຕະຖານສູງ, ມີຄຸນນະພາບສູງ ປະກອບສ່ວນຢ່າງຕັ້ງໜ້າ ແລະ ການເປັນຕົວແບບໃນການສ້າງປະຊາຄົມຄູ່ຮ່ວມຊາຕາກຳຂອງມວນມະນຸດໂລກ. ເພື່ອສ້າງຄວາມຮັບຮູ້ເລິກເຊິ່ງຢ່າງຖືກຕ້ອງກ່ຽວກັບການສ້າງຄູ່ຮ່ວມຊາຕາກຳລາວ-ຈີນ ສະບັບປີ 2024-2028 ທີ່ມີເນື້ອໃນຕົ້ນຕໍແມ່ນເພີ່ມທະວີການປະສານງານດ້ວຍຍຸດທະສາດເພື່ອຮັດແໜ້ນພື້ນຖານການເມືອງ, ການຮ່ວມມືທີ່ເປັນຮູບປະທຳເພື່ອຮັດແໜ້ນສາຍພົວພັນທີ່ມີຜົນປະໂຫຍດຮ່ວມກັນ. ເພີ່ມທະວີການຮ່ວມມືດ້ານຄວາມໝັ້ນຄົງປອດໄພ ແລະ ເພີ່ມທະວີການໄປມາຫາສູ່ກັນລະຫວ່າງປະຊາຊົນສອງຊາດເພື່ອຮັດແໜ້ນຄວາມສາມັກຄີຮັກແພງຂອງປະຊາຊົນເອົາໃຈໃສ່ປົກປັກຮັກສາລະບົບນິເວດຊຸກຍູ້ການພັດທະນາແບບຍືນຍົງເພື່ອສ້າງເປັນປະຊາຄົມຮ່ວມຊາຕາກຳສີຂຽວຕ້ອງກຳແໜ້ນເນື້ອໃນຈິດໃຈຂອງການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ເພື່ອຜັນຂະຫຍາຍເນື້ອໃນໃຫ້ປະກົດຜົນເປັນຈິງໃນອະນາຄົດ.

**(ອິນທີ ຂຽວສີຟ້າ)**

# ສາລະວັນ-ກຽນຢາງ ຕີລາຄາການຮ່ວມມືວຽກງານຮອບດ້ານ




(ສພຂ)- ກອງປະຊຸມພົບປະຂອງຄະນະຜູ້ແທນຂັ້ນສູງແຂວງສາລະວັນ ສປປ ລາວ ກັບ ຄະນະຜູ້ແທນຂັ້ນສູງ ແຂວງກຽນຢາງ ສສ.ຫວຽດນາມ ໄດ້ຈັດຂຶ້ນໃນວັນທີ 16 ກັນຍາຜ່ານມານີ້, ຢູ່ຫ້ອງປະຊຸມ VIP ສະໂມສອນແຂວງ, ຝ່າຍ ສປປລາວ ແຂວງສລະວັນ ເຂົ້າຮ່ວມໂດຍ ທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ ປະທານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14, ປະທານສະພາປະຊາຊົນແຂວງສາລະວັນ, ຝ່າຍ ສສ. ຫວຽດນາມ ແຂວງກຽນຢາງ ເຂົ້າຮ່ວມໂດຍ ທ່ານ ມາຍ ວັນ ຮວິ່ງ ຮອງເລຂາຜູ້ປະຈຳການຄະນະບໍລິຫານງານພັກແຂວງ ປະທານສະພາປະຊາຊົນແຂວງກຽນຢາງ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງສອງແຂວງ ແລະ ນັກທຸລະກິດຈາກແຂວງກຽນຢາງແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ສີເຮັງ ຫອມສົມບັດ ແລະ ທ່ານ ມາຍ ວັນ ຮວິ່ງ ໄດ້ລາຍງານສະພາບລວມແຂວງຕົນເອງໃຫ້ກັນ ແລະ ກັນຊາບ ໂດຍສະເພາະການພັດທະນາເສດຖະກິດ-ສັງຄົມ, ສະເໜີດ້ານທ່າແຮງບົ່ມຊ້ອນຕ່າງໆຂອງແຕ່ລະແຂວງ ເພື່ອສ້າງເງື່ອນໄຂໃນການແລກປ່ຽນ, ການຮ່ວມມືໃນທຸກໆດ້ານເພື່ອໃຫ້ໄດ້ຮັບການເປີດກວ້າງຫຼາຍຂຶ້ນກວ່າເກົ່າ ແລະ ລົງເລິກໃນຫຼາຍຂົງເຂດວຽກງານທັງເປັນການສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ, ການຮ່ວມມືແບບພິເສດລະຫວ່າງສອງແຂວງ ເຊິ່ງຈະເປັນເງື່ອນໄຂສ້າງກາລະໂອກາດ, ສ້າງສິ່ງເອື້ອອຳນວຍໃນດ້ານຕ່າງໆເພື່ອພັດທະນາດ້ານເສດຖະກິດ-ສັງຄົມຂອງສອງແຂວງ ໃຫ້ນັບມື້ນັບດີຂຶ້ນໃນອະນາຄົດ. ກອງປະຊຸມຄັ້ງນີ້ກໍໄດ້ຕີລາຄາເຖິງການຮ່ວມມືໃນໄລຍະແຕ່ປີ 2016 ຈົນເຖິງປັດຈຸບັນ, ນັບແຕ່ສອງແຂວງ ໄດ້ເຊັນບົດບັນທຶກການຮ່ວມມືໃນຂົງເຂດຕ່າງໆ ເປັນຕົ້ນ: ດ້ານຂົງເຂດກະສິກຳ ໄດ້ໃຫ້ການຮ່ວມມືດ້ານເຕັກນິກການຜະລິດແນວພັນ ແລະການປູກຝັງຢູ່ແຂວງສາລະວັນ, ໄດ້ສະໜັບສະໜູນແນວພັນເຂົ້າ ແລະ ຖ່າຍທອດບົດຮຽນດ້ານເຕັກນິກການປູກເຂົ້າ, ຊ່ວຍງົບປະມານການຈັດຕັ້ງປະຕິບັດໂຄງການທັງໝົດ: 1 ຕື້ກວ່າດົ່ງ, ໃນນັ້ນທົດລອງປຽບທຽບແນວພັນເຂົ້າຂອງແຂວງສາລະວັນ, ການສ້າງຕົວແບບນຳສະເໜີເຕັກນິກການປູກຝັງໃນລະດູແລ້ງ ແລະ ລະດູຝົນຢູ່ເມືອງສາລະວັນ, ຄົງເຊໂດນ, ເມືອງລະຄອນເພັງ ແລະ ຈັດຕັ້ງປະຕິບັດຢູ່ເມືອງວາປີ ໃນລະດູຝົນ ເຊິ່ງຜົນການຜະລິດເກືອບ 5 ໂຕນຕໍ່ເຮັກຕາ, ຖ່າຍທອດບົດຮຽນເຕັກນິກການປູກເຂົ້າ ນັບແຕ່ຫວ່ານກ້າ, ການດູແລກ້າ, ການປູກເຂົ້າແບບປະສົມ ແລະ ອື່ນໆ. ນອກຈາກນັ້ນ, ການຮ່ວມມືດ້ານການພົວພັນຕ່າງປະເທດກໍໄດ້ເພີ່ມທະວີຮັດແໜ້ນສາຍພົວພັນສາມັກຄີແບບພິເສດ ແລະ ເຮັດໃຫ້ເກີດມີການຮ່ວມມືຫຼາຍດ້ານຂອງສອງແຂວງ ຄື: ສາລະວັນ ແລະ ກຽນຢາງ.

ສຳລັບທິດທາງການຮ່ວມມືໃນຕໍ່ໜ້າ ນັບແຕ່ປີ 2024-2026, ຄະນະນຳຂັ້ນສູງຂອງສອງແຂວງ ກໍມີເຈດຈຳນົງໃນການຮ່ວມມືຫຼາຍຂົງເຂດວຽກງານ ເປັນຕົ້ນ: ສືບຕໍ່ເພີ່ມທະວີໃຫ້ມີການຮ່ວມມືດ້ານການສົ່ງເສີມການຄ້າ-ການລົງທຶນ, ການທ່ອງທ່ຽວ, ແລກປ່ຽນດ້ານວັດທະນະທຳ ແລະ ອື່ນໆຕື່ມອີກ ໂດຍສະເພາະການສົ່ງອອກສິນຄ້າຂອງແຂວງສາລະວັນ ແລະ ແຂວງກຽນຢາງ, ຮັດແໜ້ນການຮ່ວມມືແລະເຊື່ອມໂຍງເຂົ້າກັບການພັດທະນາການທ່ອງທ່ຽວ, ແລກປ່ຽນຂໍ້ມູນຂ່າວສານການທ່ອງທ່ຽວ ລະຫວ່າງລັດກັບລັດ, ທ້ອງຖິ່ນ ກັບທ້ອງຖິ່ນ ແລະ ພາກສ່ວນທຸລະກິດ, ເຂົ້າຮ່ວມງານຕະຫຼາດນັດ, ງານວາງສະແດງ, ກິດຈະກຳວັດທະນະທຳ, ເທສະການທາງດ້ານວັດທະນະທຳຂອງທັງສອງແຂວງຈັດຂຶ້ນໃຫ້ເປັນຮູບປະທຳ.

# ມອບໂທລະໂຄ່ງ ແລະ ສືບຕໍ່ ສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາ



(ສພຂ) - ວັນທີ 11 ກັນຍາ 2024 ຜ່ານມານີ້, ສະພາປະຊາຊົນແຂວງຫົວພັນ ໄດ້ນຳເອົາໂທລະໂຄ່ງ ຈຳນວນ 1 ຊຸດລວມມູນຄ່າ 15.000.000 ກີບ ມອບໃຫ້ບ້ານພຽງດ້າຍ ເມືອງຊຳໃຕ້ ແຂວງຫົວພັນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງບ້ານ ທັງເປັນການຂະຫຍາຍລະບົບຕາໜ່າງໂທລະໂຄ່ງ ແລະ ເຮັດໃຫ້ການກະຈາຍຂໍ້ມູນຂ່າວສານຕ່າງໆໃຫ້ທົ່ວເຖິງນັບແຕ່ຂັ້ນແຂວງລົງຮອດທ້ອງຖິ່ນ, ເຄື່ອງຊ່ວຍເຫຼືອທີ່ນຳມາມອບໃນຄັ້ງນີ້ ໂດຍໄດ້ຮັບການສະນັບສະໜູນຈາກ ບໍລິສັດ ຈະເລີນເຊກອງພະລັງງານ ຈຳກັດ; ເປັນກຽດມອບໂດຍ ທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນແລະຮັບໂດຍຜູ້ຕາງໜ້າອຳນາດການປົກຄອງ ບ້ານພຽງດ້າຍ, ມີສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຊຳໃຕ້, ອຳນາດການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານພຽງດ້າຍເຂົ້າຮ່ວມເປັນສັກຂີພິຍານນຳ.

ໃນວັນຕໍ່ມາ, ເພື່ອຍົກສູງຂີດຄວາມສາມາດ ແລະ ທັກສະການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ, ໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ໃນລະຫວ່າງວັນທີ 12-13 ກັນຍາ 2024 ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຝິກອົບຮົມທັກສະການຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດເສດຖະກິດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສພຊ) ປະຈຳເຂດເລືອກຕັ້ງ ແລະ ສພຂ ຢູ່ເມືອງຊຳໃຕ້ ແຂວງຫົວພັນ ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງ. ມີບັນດາທ່ານ ສພຂ ປະຈຳເຂດເລືອກຕັ້ງ 10 ເມືອງທົ່ວແຂວງ ທີ່ສັງກັດໃນຄະນະກຳມະການເສດຖະກິດ, ນັກວິທະຍາກອນ ແລະ ນັກສຳມະນາກອນ ຈາກສະພາປະຊາຊົນແຂວງ ແລະ ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ ໃນຂົງເຂດເສດຖະກິດ, ຕະຫຼອດຮອດ ພະນັກງານວິຊາການຂະແໜງການກ່ຽວຂ້ອງ ຂອງສະພາປະຊາຊົນແຂວງ ເຂົ້າຮ່ວມ ເຊິ່ງການຈັດກອງປະຊຸມເຝິກອົບຮົມໃນຄັ້ງນີ້ ໂດຍໄດ້ຮັບທຶນສະໜັບສະໜູນຈາກອົງການຈັດຕັ້ງສາກົນ ໂຄງການ (STPSE).

ກອງປະຊຸມໄດ້ຮັບຟັງການນຳສະເໜີບົດການແລກປ່ຽນທັກສະການຕິດຕາມກວດກາ ນິຕິກຳໃຕ້ກົດໝາຍ, ກົດໝາຍຂົງເຂດເສດຖະກິດ; ບົດກ່ຽວກັບການສ້າງນິຕິກຳໃຕ້ກົດໝາຍໃນຂົງເຂດເສດຖະກິດ; ບົດຂອດປະສານງານຮ່ວມລະຫວ່າງ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຫົວພັນ ແລະ ບັນດາພະແນກການຂອງແຂວງ ໃນຂົງເຂດເສດຖະກິດ, ບົດສະເໜີກ່ຽວກັບຂັ້ນຕອນການພິຈາລະນາ ແຜນພັດທະນາພະລັງງານໄຟຟ້າ ແລະ ແຮ່ທາດ ແຫ່ງຊາດ, ໂຄງການສຳປະທານພັດທະນາໄຟຟ້າ, ບໍ່ແຮ່ ແລະ ໂຄງລ່າງພື້ນຖານ; ບົດສະເໜີກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ພ້ອມດຽວກັນນັ້ນ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ພ້ອມທັງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນຖອດຖອນໄດ້ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງຜ່ານມາ ສົມທຽບກັບບັນດາເນື້ອໃນກອງປະຊຸມເຝິກອົບຮົມ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈເລິກເຊິ່ງມີຄວາມເປັນເອກະພາບກັນ ນຳໄປຈັດຕັ້ງປະຕິບັດ ຕາມພາລະບົດບາດຂອງຕົນ ໃຫ້ນັບມື້ດີຂຶ້ນ.

ຕອນທ້າຍປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມພ້ອມທັງຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈົ່ງພ້ອມກັນນຳເອົາຄຳຄິດຄຳເຫັນ, ຄວາມຮູ້ຈາກວິທະຍາກອນ ທີ່ໄດ້ນຳສະເໜີມານັ້ນ ໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ເປັນຕົ້ນແມ່ນການສ້າງນິຕິກຳໃຕ້ກົດໝາຍໃຫ້ໄປຕາມຂັ້ນຕອນ ເຊິ່ງເປັນວຽກງານທີ່ສຳຄັນແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ເຂົ້າສູ່ລວງເລິກເທື່ອລະກ້າວ ເພີ່ມທະວີການລົງຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງ ແລະ ສືບຕໍ່ປັບປຸງຂອດປະສານງານ ລະຫວ່າງອົງການປົກຄອງແຂວງ ພະແນກການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການປະຕິບັດວຽກງານ ເຊິ່ງກັນແລະກັນ ມີຄວາມວ່ອງໄວນັບມື້ດີຂຶ້ນເລື້ອຍໆ.

# ສພຂ ເຊກອງ ສະຫຼຸບຂະບວນການ ແຂ່ງຂັນຮັກຊາດ ແລະ ພັດທະນາ ໄລຍະ 5 ປີ



(ສພຂ) - ວັນທີ 25 ກັນຍາ 2024 ຜ່ານມານີ້, ສະພາປະຊາຊົນ ແຂວງເຊກອງ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາຄືນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໄລຍະ 5 ປີຜ່ານມາ 2016-2020 ແລະວາງທິດທາງແຜນການແຂ່ງຂັນ 5 ປີ 2021-2025 ໂດຍການເປັນປະທານ ຂອງທ່ານ ນາງ ຄຳເສັງ ທຸມມະວົງສາ ຄະນະປະຈຳ ຮອງປະທານສະພາປະຊາຊົນແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ພະນັກງານ-ລັດຖະກອນ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ທ່ານ ທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງ ໄດ້ຕີລາຄາຄືນກ່ຽວກັບການຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໄລຍະ 5 ປີຜ່ານມາ (2016-2020) ແລະ ແຜນການແຂ່ງຂັນ ຮັກຊາດ ແລະ ພັດທະນາໄລຍະ 5 ປີ (2021-2025) ຂອງສະພາປະຊາຊົນແຂວງເຊິ່ງສະແດງໃຫ້ເຖິງແຜນວຽກ, ແຜນງານເພື່ອປະຕິບັດພາລະບົດບາດ, ສິດແລະໜ້າທີ່ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການອຳນາດລັດຂັ້ນທ້ອງຖິ່ນ, ປະຕິບັດພາລະບົດບາດ ພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນແລະຕິດຕາມກວດກາການເຄົາລົບປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຜີຍແຜ່, ເຊື່ອມຊຶມບັນດານິຕິກຳຂອງສະພາປະຊາຊົນແຂວງ, ກົດໝາຍສະພາແຫ່ງຊາດ, ກົດໝາຍສະພາປະຊາຊົນຂັ້ນແຂວງ, ມະຕິ, ຄຳສັ່ງ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ ໃຫ້ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນ ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນລະບົບຕໍ່ເນື່ອງ, ຜັນຂະຫຍາຍແນວທາງແຜນການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ ແລະ ຄະນະເລຂາທິການ ເປັນແຜນງານ, ໂຄງການ, ກິດຈະກຳອັນລະອຽດ, ຖືກຕ້ອງຕາມລະບຽບການ ແລະ ສະພາບເງື່ອນໄຂຕົວຈິງ, ນຳເອົາຜົນສຳເລັດກອງປະຊຸມສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ແຕ່ລະຄັ້ງຜັນຂະຫຍາຍ, ພົບປະຜູ້ມີສິດເລືອກຕັ້ງ ໃຫ້ກວ້າງຂວາງທົ່ວເຖິງ ແທດກັບເປົ້າໝາຍຕົວຈິງໃຫ້ຫຼາຍຂຶ້ນ ດັ່ງຄຳຂວັນທີ່ວ່າ: ສ້າງສະພາປະຊາຊົນແຂວງໃຫ້ສົມເປັນອົງການຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າຊາວແຂວງເຊກອງ, ຮັບປະກັນໃຫ້ສະມາຊິກສະພາປະຊາຊົນແຂວງປະຕິບັດໜ້າທີ່ຄົບຖ້ວນຕາມສິດ, ໜ້າທີ່ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ຍົກສູງຄຸນນະພາບ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍໃຫ້ມີຄວາມສັກສິດ ເຮັດໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ, ສາມັກຄີປອງດອງຍຸຕິທຳ ບົນພື້ນຖານສະເໝີພາບໃຕ້ກົດໝາຍ. ພ້ອມດຽວກັນກໍໄດ້ຈັບມືກັນແຂ່ງຂັນ.

ໂອກາດດັ່ງກ່າວ, ທ່ານ ນາງ ຄຳເສັງ ທຸມມະວົງສາ ກໍໄດ້ມີຄຳເຫັນຊີ້ນຳໃຫ້ສືບຕໍ່ຍູ້ແຮງການຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ເປັນຂະບວນການຟົດຟື້ນກວ້າງຂວາງ ແລະ ຕໍ່ເນື່ອງ, ພ້ອມກັນສຸມໃສ່ພັດທະນາຕົນເອງ ແລະພັດທະນາວິຊາສະເພາະໃຫ້ມີຄວາມເຂັ້ມແຂງ, ເພີ່ມທະວີໃນການຊີ້ນຳ-ນຳພາ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ສ້າງໃຫ້ໄດ້ການຫັນປ່ຽນຢ່າງຕັ້ງໜ້າ, ສືບຕໍ່ຮັບປະກັນໂຄງປະກອບກົງຈັກການຈັດຕັ້ງ ຂອງສະພາປະຊາຊົນແຂວງ ໃຫ້ມີສະຖຽນລະພາບທາງດ້ານການເມືອງ ມີຄວາມເປັນລະບຽບຮຽບຮ້ອຍ, ເພີ່ມທະວີການຄຸ້ມຄອງລັດຄຸ້ມຄອງສັງຄົມຕາມລະບຽບກົດໝາຍ ເສີມຂະຫຍາຍ ບົດບາດສະພາປະຊາຊົນແຂວງ ໃຫ້ສູງຂຶ້ນເທື່ອລະກ້າວ.

**(ນາງ ນາລີວັນ)**





## ປະທານ...

(ຕໍ່ຈາກໜ້າ 1)

ນິດກູບາ, ຫົວໜ້າອົງການໄອຍະການສູງສຸດ ແຫ່ງ ສາທາລະນະລັດກູບາ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢ່າງເປັນທາງການ ຢູ່ ສປປ ລາວ ລະຫວ່າງວັນທີ 28 ກັນຍາ ຫາ 1 ຕຸລາ 2024.

ສະຫາຍປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຂອງສະຫາຍ ນາງ ຢາມີລາ ເປນາ ໂອເຈດາ ພ້ອມດ້ວຍຄະນະ ໃນຄັ້ງນີ້ ເຊິ່ງເປັນໂອກາດອັນດີໃນການປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນນຳກັນ ທັງເປັນການປະກອບສ່ວນເສີມ ຂະຫຍາຍສາຍພົວພັນຮ່ວມມືທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນ 2 ຊາດ ໃຫ້ນັບມື້ນັບຂະຫຍາຍຕົວແລະເກີດດອກອອກຜົນຍິ່ງຂຶ້ນນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ ລາວ-ກູບາ. ສະຫາຍປະທານສະພາແຫ່ງຊາດ ຍັງໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນໄປຍັງສະຫາຍ ເອັສເຕ ບັນ ລາໂຊ ເຮີນານເດຊ (Esteban Lazo Hernandez) ກຳມະການກົມການເມືອງສູນກາງພັກກອມມູນິດກູບາ, ປະທານສະພາແຫ່ງຊາດອຳນາດປະຊາຊົນ ແຫ່ງ ສ. ກູບາ ພ້ອມທັງເຊື້ອເຊີນໄປຍັງຄະນະຜູ້ແທນສະພາແຫ່ງຊາດອຳນາດປະຊາຊົນ ເພື່ອເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 17-23 ຕຸລາທີ່ຈະມາເຖິງ ເຊິ່ງການເຂົ້າຮ່ວມຈະເປັນການໃຫ້ການສະໜັບສະໜູນ ແລະ ຊ່ວຍສະພາແຫ່ງຊາດລາວ ໃນການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວໃຫ້ສຳເລັດຜົນ.

ສະຫາຍ ນາງ ຢາມີລາ ເປນາໂອເຈດາໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບອັນອົບອຸ່ນຂອງ ປະທານສະພາແຫ່ງຊາດ ພ້ອມທັງລາຍງານໂດຍຫຍໍ້ການຮ່ວມມືກັບອົງການໄອຍະການປະຊາຊົນສູງສຸດຂອງ ສປປ ລາວ ໃນໄລຍະຜ່ານມາ. ການມາເຄື່ອນໄຫວວຽກງານທາງການຄັ້ງນີ້ ສອງຝ່າຍໄດ້ພ້ອມກັນລົງນາມບົດບັນທຶກຊ່ວຍຈຳກ່ຽວກັບແຜນກິດຈະກຳຮ່ວມມື ສົກປີ 2025-2026 ເຊິ່ງມີບາງເນື້ອໃນຕົ້ນຕໍຄື: ແລກປ່ຽນການຢ້ຽມຢາມຄະນະຜູ້ແທນສອງອົງການໄອຍະການເຊິ່ງກັນແລະກັນ; ເຂົ້າຮ່ວມກອງປະຊຸມນານາຊາດວ່າດ້ວຍອາຊະຍາກຳ ຄັ້ງທີ 16 ປະຈຳປີ 2025 ແລະ ກອງປະຊຸມກ່ຽວກັບນິຕິກຳ, ກົດໝາຍແລະສັງຄົມ ຄັ້ງທີ 4 ທີ່ ສ.ກູບາ; ຈັດກອງປະຊຸມທາງໄກເພື່ອແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານກ່ຽວກັບການຕ້ານອາຊະຍາກຳທີ່ເກີດຂຶ້ນຈາກ ການນຳໃຊ້ເຕັກໂນໂລຊີ ແລະ ການສື່ສານ, ການຕ້ານການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ສູນກາງພັກ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງພາຍໃນ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຈາກສະພາແຫ່ງຊາດແລະສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ພົບປະອຳນາດການປົກຄອງບ້ານບົວແວງຄຳ ເມືອງປາກຊັນ ແຂວງບໍລິຄຳໄຊ.

ຕາງໜ້າຄະນະນຳເມືອງປາກຊັນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເຊິ່ງມີບາງຕອນວ່າ: ການແບ່ງຂັ້ນຄຸ້ມຄອງຂອງບັນດາຂະແໜງການຕາມທິດ 3 ສ້າງເຂົ້າສູ່ລວງເລິກ ແມ່ນຮຽກຮ້ອງໃຫ້ມີການປັບປຸງແກ້ໄຂລະບຽບການ, ກົນໄກ ແລະ ນິຕິກຳຈຳນວນໜຶ່ງທີ່ຍັງອັດຕັນ; ພ້ອມນີ້ ກໍມີການຄົ້ນຄວ້າຄວາມອາດສາມາດ, ທ່າແຮງຂອງຕົນກ່ຽວກັບສິດແລະຄວາມຮັບຜິດຊອບທີ່ສາມາດປະຕິບັດໄດ້, ເສີມຂະຫຍາຍສິດເປັນເຈົ້າຕົນເອງ ພ້ອມທັງສ້າງຄວາມເຂັ້ມ ແຂງໃຫ້ແກ່ເມືອງ, ບ້ານ ຜ່ານການຈັດຕັ້ງປະຕິບັດວຽກງານຕົວຈິງທີ່ແຂວງມອບໃຫ້ເມືອງ, ເມືອງມອບໃຫ້ບ້ານ ຢູ່ບັນດາຫ້ອງການອ້ອມຂ້າງເມືອງ. ອຳນາດການປົກຄອງເມືອງປາກຊັນໄດ້ເອົາໃຈໃສ່ຄຸ້ມຄອງໂຄງການລົງທຶນຂອງລັດທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນແມ່ນການປະຕິບັດໂຄງການມູນຄ່າ 5 ຕື້ລົງມາ; ການເງິນເມືອງໄດ້ເປັນເຈົ້າການໃນການສົມທົບກັບພະແນກການເງິນແຂວງ ໃນການຄົ້ນຄວ້າສັງລວມສ້າງແຜນລາຍຮັບ-ລາຍຈ່າຍຂອງເມືອງ ໂດຍອີງໃສ່ທ່າແຮງບົ່ມຊ້ອນທີ່ມີຢູ່ພາຍໃນເມືອງເປັນຫົວໜ່ວຍການຈັດເກັບລາຍຮັບເຂົ້າງົບປະມານຕາມແຜນລາຍຮັບຂອງປີ 2024; ເມືອງໄດ້ລົງທຶນປັບປຸງກໍ່ສ້າງຍົກລະດັບພື້ນຖານໂຄງລ່າງດ້ານເສດຖະກິດ ເພື່ອຮັບໃຊ້ການຜະລິດແລະການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ, ມີເສັ້ນທາງທຽວໄດ້ຕະຫຼອດປີໃນ 54 ບ້ານເທົ່າກັບ 100%; ເມືອງໄດ້ມີແຜນສ້າງຄວາມເຂັ້ມແຂງດ້ານເສດຖະກິດ-ການເງິນ ໂດຍອີງໃສ່ທ່າແຮງບົ່ມຊ້ອນຂອງເມືອງ ແລະ ໄດ້ສົມທົບກັບບັນດາຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງໃນການສົ່ງເສີມການຜະລິດສິນຄ້າຕາມຄວາມຕ້ອງການຂອງຕະຫຼາດ ເຊິ່ງສະແດງອອກເຊັ່ນ: ເນື້ອທີ່ນາແຊງມີ 450 ເຮັກຕາ (ທຽບໃສ່ປີ ຜ່ານມາຫຼຸດລົງ 15 ເຮັກຕາ) ສະເລ່ຍລາຍຮັບໄດ້ 4.3 ໂຕນ/ເຮັກຕາ, ເນື້ອທີ່ປູກພືດລະດູແລ້ງ 2,230 ເຮັກຕາ (ທຽບໃສ່ປີ ຜ່ານມາເພີ່ມຂຶ້ນ 10 ເຮັກຕາ); ເມືອງໄດ້ຂຶ້ນທະບຽນອອກໃບຕາດິນຕາມລະບຽບກົດໝາຍ 1,500 ຕອນ (ທຽບໃສ່ປີ ຜ່ານມາເພີ່ມຂຶ້ນ 593 ຕອນ), ຢັ້ງຢືນສຳມະໂນຕອນດິນອອກໃບແຈ້ງ 146 ຕອນ (ທຽບໃສ່ປີຜ່ານມາຫຼຸດລົງ 79 ຕອນ); ເມືອງໄດ້ອຳນວຍຄວາມສະດວກຕໍ່ກັບການສົ່ງເສີມການຜະລິດສິນຄ້າຂອງປະຊາຊົນເຊັ່ນ: ຕະຫຼາດຮອງຮັບແລະການຊອກຫາແຫຼ່ງທຶນ ນະໂຍບາຍໃຫ້ແກ່ປະຊາຊົນພາຍໃນເມືອງ.

ຕາງໜ້າຄະນະອົງການປົກຄອງບ້ານບົວແວງຄຳ ໄດ້ລາຍງານກ່ຽວກັບສະພາບການພົ້ນເດັ່ນບາງດ້ານ ແລະ ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເຊິ່ງບ້ານບົວແວງຄຳ ມີພົນລະເມືອງ 2,500 ກວ່າຄົນ, ມີ 540 ກວ່າຄອບຄົວ; ໃນໄລຍະຜ່ານມາ, ພື້ນຖານໂຄງລ່າງຂອງບ້ານໄດ້ຮັບການພັດທະນາ ເປັນຕົ້ນແມ່ນເສັ້ນທາງ ເຮັດໃຫ້ການສັນຈອນໄປມາມີຄວາມສະດວກສະບາຍ, ຄວາມທຸກຍາກຂອງປະຊາຊົນໄດ້ຮັບການແກ້ໄຂຢ່າງຈິງຈັງ ແລະ ກວ້າງຂວາງ. ປະຊາຊົນມີຄວາມຕື່ນຕົວ ຢ່າງຕັ້ງໜ້າໃນການພັດທະນາເສດຖະກິດຄອບຄົວຂອງຕົນ, ສ່ວນໃຫຍ່ມີອາຊີບປູກຝັງ ໂດຍສະເພາະແມ່ນປູກເຂົ້ານາປີ; ນອກນັ້ນ ຍັງເຮັດສວນມັນຕົ້ນ, ສວນຢາງພາລາ ໄປຄຽງຄູ່ກັບການລ້ຽງສັດເປັນສຳຮອງ ແລະຍັງມີການບໍລິການຈຳນວນໜຶ່ງ ເຮັດໃຫ້ຊີວິດການເປັນຢູ່ນັບມື້ນັບດີຂຶ້ນຢ່າງບໍ່ຢຸດຢັ້ງ.

ໃນໂອກາດດັ່ງກ່າວ, ຄະນະຂອງທ່ານຮອງປະທານສະພາແຫ່ງຊາດ ໄດ້ມອບອຸປະກອນການຮຽນ-ການສອນແລະເຄື່ອງບໍລິໂພກຈຳນວນໜຶ່ງ ໃຫ້ແກ່ອົງການປົກຄອງບ້ານບົວແວງຄຳ ກໍຄືຄູສອນ ແລະ ນ້ອງນັກຮຽນພາຍໃນບ້ານ.

ຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມ, ຊຸກຍູ້ຫົວໜ່ວຍທຸລະກິດຕົວແບບຂອງແຂວງບໍລິຄຳໄຊຈຳນວນໜຶ່ງ ເປັນຕົ້ນໂຮງງານຜະລິດໝໍ້ແປງໄຟຟ້າເອັສເຄ (SK) ທີ່ເມືອງປາກຊັນໂດຍການຕ້ອນຮັບຂອງທ່ານ ໄຊຍະເພັດ ຈັນທິສອນ ຜູ້ອຳນວຍການໃຫຍ່ໂຮງງານດັ່ງກ່າວ; ທັງນີ້, ກໍເພື່ອເປັນການຊຸກຍູ້ສົ່ງເສີມ ແລະ ໃຫ້ກຳລັງໃຈແກ່ຫົວໜ່ວຍທຸລະກິດທີ່ເປັນຕົວແບບ ໃຫ້ເສີມຂະຫຍາຍມູນເຊື້ອ ແລະຕັ້ງໜ້າສືບຕໍ່ປະກອບສ່ວນສ້າງເສດຖະກິດຂອງແຂວງຂອງຊາດໃຫ້ເຂັ້ມແຂງຂຶ້ນເລື້ອຍໆ.

**(ບຸນເກີດ ວົງໄຊຍາ)**



## ຕິດຕາມກວດກາ...

(ຕໍ່ຈາກໜ້າ 1)

ສາລະວັນ, ແຂວງຈຳປາສັກເຄື່ອນໄຫວຢູ່ເມືອງປາກຊ່ອງ ແລະ ນະຄອນປາກເຊ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກກັບການນຳຂອງແຂວງ, ເມືອງ-ນະຄອນ, ບ້ານ ພ້ອມດ້ວຍພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດຊຸດທີ VII ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດເຮັດທົດລອງວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ເພື່ອຊອກໃຫ້ເຫັນຜົນງານ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ຜ່ານການຈັດຕັ້ງປະຕິບັດຕົວຈິງຂອງສູນກາງ ແລະ ທ້ອງຖິ່ນໃນໄລຍະຜ່ານມາ; ເກັບກຳຂໍ້ມູນການຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບແຂວງ, ແຂວງກັບເມືອງ ແລະ ເມືອງກັບບ້ານ.

ໃນການເຄື່ອນໄຫວຢູ່ 2 ແຂວງ ໄດ້ເປີດກອງປະຊຸມເພື່ອຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເຊິ່ງ ທ່ານ ສົມໃຈ ອຸ່ນຈິດ ຮອງເຈົ້າແຂວງໆສາລະວັນ ລາຍງານໃຫ້ຮູ້ວ່າ: ນັບແຕ່ປີ 2016 ຮອດປັດຈຸບັນ, ສາມາດປະເມີນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ໃນ 7 ດ້ານ ບັນລຸ 6 ດ້ານ ແລະ ໃນ 66 ຕົວຊີ້ວັດບັນລຸ 59 ຕົວຊີ້ວັດ, ການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໃນ 5 ດ້ານ 47 ຕົວຊີ້ວັດ (ຖືວ່າບໍ່ທັນບັນລຸ, ແຕ່ບາງເມືອງ ມີບາງດ້ານ ແລະ ບາງຕົວຊີ້ບອກ ເພີ່ມຂຶ້ນທຽບໃສ່ປີຜ່ານມາ) ແລະ ການສ້າງບ້ານເປັນຫົວໜ່ວຍພັດທະນາ ໄດ້ 309 ບ້ານ ເທົ່າກັບ 53.46% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ (578 ບ້ານ); ທ່ານ ສະນັ່ນ ສີພາພົມມະຈັນ ຮອງເລຂາພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງຈຳປາສັກກໍລາຍງານໃຫ້ຮູ້ວ່າ: ໄດ້ສຸມໃສ່ວຽກງານການປະເມີນໃນໄລຍະປີ 2021-2024 ຕາມແບບຟອມການປະເມີນຂອງກະຊວງພາຍໃນ ເຊິ່ງໃນການຈັດຕັ້ງປະຕິບັດຕົວຈິງນັ້ນ ໄດ້ເລັ່ງໃສ່ປະເມີນແຂວງ ຕາມ 7 ດ້ານ 66 ຕົວຊີ້ວັດ, ປະເມີນເມືອງ-ນະຄອນ ຕາມ 5 ດ້ານ 47 ຕົວຊີ້ວັດ ແລະ ປະເມີນບ້ານ ຕາມ 4 ດ້ານ 30 ຕົວຊີ້ວັດ ໂດຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ບັນລຸ 63 ຕົວຊີ້ວັດເທົ່າກັບ 95.45%, ການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານບັນລຸ 100% ມີນະຄອນປາກເຊ ແລະ ເມືອງໂພນທອງ, ການສ້າງບ້ານເປັນຫົວໜ່ວຍພັດທະນາ ໄດ້ 515 ບ້ານ ຍັງ 127 ບ້ານ ໃນທົ່ວແຂວງ. ຈາກນັ້ນ, ຄະນະຈາກສູນກາງ ກໍໄດ້ມີບາງຄຳເຫັນ ແລະ ຄຳຖາມເຈາະຈີ້ມບາງບັນຫາທີ່ຍັງບໍ່ທັນຈະແຈ້ງ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນເນັ້ນໜັກໃຫ້ຄະນະນຳຂອງແຂວງ, ເມືອງ-ນະຄອນ ແລະ ບ້ານ ເອົາໃຈໃສ່ຈັດຕັ້ງປະຕິບັດ, ຕິດຕາມກວດກາ ໄປຄຽງຄູ່ກັບການປະເມີນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເພາະເປັນວຽກທີ່ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃຫ້ນັບມື້ມີການພັດທະນາດີຂຶ້ນ ທັງຮຽກຮ້ອງໃຫ້ປວງຊົນທົ່ວພັກ-ທົ່ວລັດ ກໍຄືປະຊາຊົນບັນດາເຜົ່າພາຍໃນສອງແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ (ຮອດປີ 2025) ໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງແຂງຂັນ ເພື່ອແກ້ໄຂບັນຫາທີ່ເຄັ່ງຮ້ອນໃນປັດຈຸບັນ ໃຫ້ຫຼຸດໜ້ອຍຖອຍລົງ ແລ້ວກ້າວໄປສູ່ການປັບປຸງຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໃຫ້ນັບມື້ນັບດີຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**




# ຄົນອາວຸໂສເຄີຍເປັນຄົນໜຸ່ມ ແຕ່ຄົນໜຸ່ມບໍ່ເຄີຍ

**# ຕົ້ນກົບເມກ**

ບົດຮຽນຊີວິດ ຫຼື ບົດຮຽນສັງຄົມທີ່ຈະກ້າວໄປສູ່ອະນາຄົດຍືນຍົງ-ໝັ້ນຄົງ ແລະ ກ້າວໜ້າ ຜູ້ຂຽນເຂົ້າໃຈວ່າ: ຄົນທີ່ຕ່າງອາຍຸ ຕ່າງຖານະໃນສັງຄົມ ຄວນຮັບຟັງ ແລະ ຮຽນຮູ້ຈາກກັນ ແລະ ກັນ ໃຫ້ເຂົ້າໃຈຖືກຕ້ອງ ເຊິ່ງຂະນະດຽວກັນແຕ່ລະຄົນທີ່ມີອາຍຸ-ປະສົບບົດຮຽນຊີວິດ ຍ່ອມຄວນຈະຮູ້ສຶກຕ້ອງຖ່າຍທອດບົດຮຽນເຫຼົ່ານັ້ນແກ່ຄົນຮຸ່ນໃໝ່ ຂະນະດຽວກັນ ຄົນຮຸ່ນໃໝ່ກໍຕ້ອງອ່ອນນ້ອມຖ່ອມຕົນຍອມຮັບຟັງ-ສຶກສາເອົາບົດຮຽນ.

ຄົນອາວຸໂສນັ້ນ ອາດໄດ້ຜ່ານໜ້າວຽກຮັບໃຊ້ສັງຄົມມາຍາວນານ ສາມາດສະຫຼຸບເອົາເປັນບົດຮຽນແບບຢ່າງ ຫຼື ແນວທາງເພື່ອປັບປຸງໃຫ້ເຂົ້າກັບການເວລາປ່ຽນແປງ ແຕ່ບໍ່ແມ່ນຈະໃຫ້ຫຼົງລືມ ຫຼື ບໍ່ຮຽກຮ້ອງນຳມາໃຊ້ສິ່ງມີຄ່າພຽງເພາະວ່າຄົນຮຸ່ນໃໝ່ກຳລັງຫຼົງໃນກະແສມ່ວນ ເພິ່ງພໍໃຈພຽງໃນໜ້າທີ່ປັດຈຸບັນ ຈົນລືມອະດີດ ເຊິ່ງຂາດຄຸນສົມບັດເປັນມະນຸດທີ່ລືມອະດີດ ບໍ່ຕ່າງກັບລືມພໍ່ແມ່ລືມບັນພະບຸລຸດມັນກໍຈະເຂົ້າທຳນອງຄົນອະກະຕັນຍູ.

ຄົນໜຸ່ມທີ່ຍັງບໍ່ເຄີຍເຖົ້າ ກໍອາດຈະວາດພາບຄົນທີ່ຜ່ານວຽກ-ໜ້າວຽກໜັກໜ່ວງຜ່ານມາໄດ້ຍາກ ແລະ ຖ້າຄົນໜຸ່ມຫຼົງຢູ່ກັບການເພີດເພີນມ່ວນກັບຂອງກິນຂອງຫຼິ້ນໃໝ່ ກໍຍັງອາດຄິດບໍ່ເຫັນຄຸນຄ່າຄົນອາວຸໂສ... ຄົນໜຸ່ມທີ່ດີຈຶ່ງຄວນອ່ອນນ້ອມຖ່ອມຕົນ-ຍອມຮຽນຮູ້ນຳຜູ້ມີບົດຮຽນ, ຍອມເຊີດຊູຜູ້ຮັບໃຊ້ຊາດສັງຄົມທີ່ມີຄວາມຮູ້ບົດຮຽນມາກ່ອນ ດີກວ່າອວດອີ່ງທະນົງຕົນ ເອົາໂຕລອດໄດ້ຄົນດຽວ ຫຼື ພຽງຄອບຄົວ ແຕ່ສ່ວນລວມຂາດເຂີນສູນເສຍສິ່ງທີ່ຄວນໄດ້ຮັບຮ່ວມກັນຢ່າງສົມສຸກອົບອຸ່ນເມດຕາສາມັກຄີ.

ສັງລວມໄດ້ວ່າ: ຜູ້ເຄີຍຜ່ານໂລກມາກ່ອນ ກໍຕ້ອງເປັນແບບຢ່າງ-ມີຫຼັກການໜ້າເຊື່ອຖືໜ້າເຄົາລົບ ແລະ ມີຄຸນ ຄ່າແທ້ຈິງ, ຄົນໜຸ່ມທີ່ດີ ກໍຕ້ອງບໍ່ຫຼົງໂຕເອງ-ບໍ່ໂອ້ອວດ ຫຼົງກະແສຈົນຫຼົງທາງ... ສະເໜີແລກປ່ຽນ.






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ບົດຮຽນພາຍໃນປະເທດ ແລະ ບົດຮຽນຂອງປະທານອື່ນໆ ໄດ້ຢັ້ງຢືນໃຫ້ພວກເຮົາຢ່າງຈະແຈ້ງວ່າ: ເມື່ອມີກອງກຳລັງຂອງປະຊາຊົນຢູ່ນຳເຮົາແລ້ວ ວຽກການອັນໃຫຍ່ຫຼວງພຽງໃດ ຍາກຊາພຽງໃດກໍເຮັດໄດ້ໝົດ. ຖ້າບໍ່ມີກອງກຳລັງປະຊາຊົນແລ້ວ ວຽກການອັນໃດກໍແມ່ນເຮັດບໍ່ໄດ້. ປະຊາຊົນນັ້ນ ເຂົາເຈົ້າຈະຮູ້ແກ້ໄຂຫຼາຍບັນຫາດ້ວຍວິທີອັນງ່າຍດາຍທີ່ສຸດ, ວ່ອງໄວທີ່ສຸດ ແລະ ຄົບຖ້ວນທີ່ສຸດ. ແຕ່ບັນຫາອັນດຽວກັນນັ້ນ ຄົນຜູ້ເກັ່ງກ້າສາມາດ ຫຼື ອົງຄະນະທີ່ໃຫຍ່ຫຼວງ ພິຈາລະນາແກ້ໄຂເຫິງນານກໍບໍ່ໄດ້.

ບົດຮຽນໃນທ້ອງຖິ່ນຫຼາຍແຫ່ງໄດ້ສະແດງໃຫ້ຮູ້ວ່າ: ບ່ອນໃດວຽກການເຮັດໄດ້ຜົນໜ້ອຍ ບ່ອນນັ້ນແມ່ນພະນັກງານຫ່າງໄກຈາກປະຊາຊົນ, ບໍ່ຮ່ວມປຶກສາຫາລືກັບປະຊາຊົນ ແລະ ບໍ່ຊີ້ແຈງໃຫ້ປະຊາຊົນເຂົ້າໃຈ, ບ່ອນໃດວຽກການເດີນໄຄແດ່ ບ່ອນນັ້ນແມ່ນພະນັກງານຊ່າງຊີ້ແຈງອະທິບາຍ ຊ່າງຮ່ວມມືກັບປະຊາຊົນປຶກສາຫາລື ແຕ່ຫາກຍັງບໍ່ທັນຮອບຄອບຄົບຖ້ວນ. ບ່ອນໃດວຽກການເດີນດີຫຼາຍນັ້ນ ບ່ອນນັ້ນແມ່ນພະນັກງານຊ່າງຊີ້ແຈງອະທິບາຍ ແລະ ຮ່ວມປຶກສາຫາລືກັບປະຊາຊົນ, ບໍ່ວ່າຈະເປັນວຽກໃຫຍ່ ຫຼື ວຽກນ້ອຍ ແລະ ຊ່າງພ້ອມກັນກັບປະຊາຊົນພິຈາລະນາເຖິງຕົ້ນປາຍ ແລະ ອີງໃສ່ປະຊາຊົນເພື່ອເຮັດຈົນສຳເລັດຜົນ.

ຖ້າວ່າຢາກໃຫ້ປະຊາຊົນຈິງໃຈສະເໜີຄຳຄິດຄຳເຫັນຂອງເຂົາເຈົ້ານັ້ນ ພະນັກງານກໍຕ້ອງຈິງໃຈອົດທົນຄວາມລຳບາກ ແລະ ຊ່າງຊັກຊວນສົ່ງເສີມໃຫ້ເຂົາເຈົ້າເວົ້າ, ແລ້ວພວກເຮົາຕ້ອງອາໄສຄຳຄິດຄຳເຫັນເລັກໆນ້ອຍໆ ທີ່ປະຊາຊົນເວົ້າມານັ້ນມາລວບລວມເຂົ້າກັນ, ຈັດໃຫ້ເປັນຖ່ານເປັນຖັນຕາມລຳດັບ ແລ້ວພ້ອມກັບປະຊາຊົນອອກແຮງປະຕິບັດ. ເຮັດແນວນັ້ນແມ່ນເຊີດຊູລະດັບຄວາມຮັບຮູ້ຄວາມສາມາດຂອງປະຊາຊົນຂອງຕົນເອງຂຶ້ນຕື່ມອີກ.

ອ່ານຕໍ່ສະບັບໜ້າ...




# ຕີນ–ເທົ້າ

ຄຳສຸພາສິດລາວ ທີ່ເວົ້າເຖິງ "ຕີນ" ເຫັນວ່າມີຫຼາຍກວ່າອະໄວຍະວະສ່ວນອື່ນໆ ເຊັ່ນ

"ໄວປາກເສຍສິນ ໄວຕີນຕົກຕົ້ນໄມ້"

"ສີ່ຕີນຍັງຮູ້ພະລາດ ນັກປາດຍັງຮູ້ຫຼົງ"

"ຄຳທໍ່ຫົວໝາ ບໍ່ທໍ່ນາຕີນບ້ານ"

"ຕີນຊ້າງຢຽບປາກນົກ"

"ຕີນ" ເປັນຄຳລາວເດີມ ເຊິ່ງເປັນຄຳຮ່ວມຕະກຸນກັບພາສາໄທສະຫຍາມ, ໄທລື້, ໄທດຳ, ໄທຂາວ, ໄທແດງ, ໄທໃຫຍ່, ໄທອາຫົມ, ພາສາປຸ້ອີ ແລະ ພາສາຈ້ວງ.

ຄຳວ່າ "ຕີນ" ປາກົດຢູ່ໃນວັດຈະນານຸກົມພາສາລາວສະບັບຕ່າງໆດັ່ງນີ້:

ໃນວັດຈະນານຸກົມລາວຂອງມະຫາສີລາ ວີລະວົງ ໄດ້ໃຫ້ຄວາມໝາຍ "ຕີນ" ວ່າ "ອະໄວຍະວະທີ່ໃຊ້ຍ່າງ, ບ່ອນຕັ້ງ, ບ່ອນສຸດຂອງຂາທາງລຸ່ມ.

ວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ ປີ 2008 ໄດ້ໃຫ້ນິຍາມວ່າ "ອະໄວຍະວະທີ່ໃຊ້ຍ່າງ, ບ່ອນຕັ້ງ, ບ່ອນສຸດຂອງຂາທາງລຸ່ມ ເອີ້ນ ຕີນ, ຮັບໃຊ້ຕາງມືຕາງຕີນ ເອີ້ນຕາງຕີນ.

ວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ໄດ້ໃຫ້ຄວາມໝາຍວ່າ "ອະໄວຍະວະທີ່ໃຊ້ຍ່າງຂອງຄົນຫຼືສັດ, ບ່ອນສຸດຂອງຂາທາງລຸ່ມ, ບ່ອນຕັ້ງລຸ່ມສຸດຂອງສິ່ງຂອງໃດໜຶ່ງ ເຊັ່ນ ຕີນຄົນ, ຕີນພູ, ຕີນຂັ້ນໄດ, ຕີນໂຕະ, ຕີນເສົາ.

"ຕີນ" ນອກຈາກໃຊ້ເວົ້າທົ່ວໄປແລ້ວ, "ຕີນ" ຍັງຖືກນຳໃຊ້ໄປໃນທາງບໍ່ສຸພາບ ໂດຍສະເພາະແມ່ນຄຳດ່າ ເພາະຖື "ຕີນ" ເປັນອະໄວຍະວະທີ່ຕ່ຳສຸດ. ຍິ່ງໄປກວ່ານັ້ນ ໃນການໃຊ້ພາສາກາຍ ເພິ່ນຫ້າມບໍ່ໃຫ້ໃຊ້ຕີນຊີ້ເປັນເດັດຂາດ ຖ້າໃຜຂືນເຮັດ ກໍສະແດງວ່າຜູ້ນັ້ນບໍ່ຮູ້ວັດທະນະທຳໃນການໃຊ້ພາສາກາຍຂອງລາວ.

ຄຽງຄູ່ກັບການໃຊ້ຄຳວ່າ "ຕີນ", ໃນພາສາລາວຍັງມີຄຳວ່າ "ເທົ້າ" ເຊິ່ງເປັນຄຳພ້ອງຄວາມໝາຍ ເປັນຄຳທີ່ປາກົດມີໃຊ້ລຸນຫຼັງຄຳວ່າ "ຕີນ" ຫຼາຍຮ້ອຍປີ ຫຼືອາດຈະເປັນຫຼາຍພັນປີກໍເປັນໄດ້.

ຄຳວ່າ "ເທົ້າ" ທີ່ເປັນຄຳພ້ອງຄວາມໝາຍກັບ "ຕີນ" ນີ້ ປາກົດເຫັນມີບັນຈຸຢູ່ໃນວັດຈະນານຸກົມພາສາລາວທຸກສະບັບ ນັບຕັ້ງແຕ່ວັດຈະນານຸກົມລາວຂອງມະຫາສີລາ ວີລະວົງ ປີ 1960, ວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ ປີ 2008 ແລະ ວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ລ້ວນແຕ່ບັນຈຸຄຳ "ເທົ້າ" ພ້ອມໃຫ້ຄວາມໝາຍວ່າ "ຕີນ".

ເມື່ອສະໄໝຊຸມປີ 50-70 ຂອງສະຕະວັດທີ່ແລ້ວ, ເພິ່ນມັກໃຊ້ຄຳວ່າ "ເທົ້າ" ແທນ "ຕີນ" ເພື່ອສະແດງຄວາມສຸພາບ ແລະມັກໃຊ້ຢູ່ໃນສຳນວນທີ່ວ່າ "ສາມີເປັນຊ້າງເທົ້າໜ້າ ພັນລະຍາເປັນຊ້າງເທົ້າຫຼັງ". ພ້ອມກັນນັ້ນ, ຄຳວ່າ "ຖົງຕີນ" ກໍມັກຈະເອີ້ນວ່າ "ຖົງເທົ້າ".

ແຕ່ພາຍຫຼັງປະເທດຊາດປົດປ່ອຍແລ້ວ, ຄຳວ່າ "ເທົ້າ" ກໍຄ່ອຍໆເສື່ອມຄວາມນິຍົມຢູ່ໃນສັງຄົມລາວ. ຄຳວ່າ "ຕີນ" ເຊິ່ງເປັນຄຳລາວທີ່ມີມາແຕ່ປາງປະຖົມບູຮານພຸ້ນກໍໄດ້ຮັບການນຳໃຊ້ຢ່າງກວ້າງຂວາງ. ເວລາເຈັບອະໄວຍະວະເບື້ອງລຸ່ມສຸດ ຄົນເຈັບກໍເວົ້າກັບແພດໝໍຢ່າງບໍ່ກະດຽມສົບກະດຽມປາກວ່າ "ເຈັບຕີນ" ແລະເມື່ອໄປຊື້ຖົງເພື່ອສຸບໃສ່ອະໄວຍະວະລຸ່ມສຸດຢູ່ຕະຫຼາດ ກໍເວົ້າຢ່າງເຕັມສົບເຕັມປາກວ່າ "ຖົງຕີນ". ຈາກບ່ອນນີ້ ສະແດງໃຫ້ເຫັນວ່າ ຄຳສັບໃດໜຶ່ງຈະເປັນຄຳສຸພາບ ຫຼືບໍ່ສຸພາບ ແມ່ນສັງຄົມເປັນຜູ້ກຳນົດ.

ແຕ່ຄຳວ່າ "ເທົ້າ" ນີ້ຜັດໄດ້ຮັບຄວາມນິຍົມໃຊ້ຢູ່ປະເທດເພື່ອນບ້ານຢ່າງກວ້າງຂວາງ ເພາະເພິ່ນຖືວ່າ "ເທົ້າ" ເປັນຄຳສຸພາບ ສ່ວນ "ຕີນ" ເປັນຄຳບໍ່ສຸພາບ.

ຢູ່ໃນວັດຈະນານຸກົມພາສາລາວຂອງສີວຽງແຂກ ກອນນິວົງ ກໍໄດ້ບັນຈຸຄຳວ່າ "ເທົ້າ" ເຊັ່ນກັນ ແລະໃຫ້ນິຍາມວ່າ "ຕີນ" ແລະ ອະທິບາຍຕໍ່ໃສ່ວ່າ "ເປັນຄຳເວົ້າທີ່ນິຍົມໃຊ້ຢູ່ປະເທດໄທ" (ເທົ້າ ໃນພາສາໄທຈະອອກສຽງເປັນ "ທ້າວ").

ມາຮອດປັດຈຸບັນ ການນຳໃຊ້ "ເທົ້າ" ໄດ້ປາກົດເຫັນຂຽນຢູ່ໃນເທິງປ້າຍຂອງບາງຮ້ານນວດວ່າ "ນວດຝາເທົ້າ". ບາງຮ້ານກໍຂຽນວ່າ "ນວດຝາເທົ້າ" ແລະມີວົງເລັບວ່າ (ນວດຝາຕີນ). ແຕ່ສ່ວນຫຼາຍກໍຍັງໃຊ້ "ນວດຝາຕີນ". ພ້ອມກັນນັ້ນ, ໃນພາສາປາກເວົ້າເວລາຫັດກາຍ ພວກເຮົາຍັງໃຊ້ວະລີທີ່ວ່າ "ຢ່ຳເທົ້າ" ບໍ່ສູ້ໄດ້ຍິນໃຊ້ວ່າ "ຢ່ຳຕີນ" ແລະ ກໍຍັງມີໄມ້ທີ່ຜູ້ເຖົ້າມັກໃຊ້ຊຸຄ້ຳເວລາຍ່າງກໍແມ່ນ "ໄມ້ເທົ້າ".

**# ຂໍ້ສັນນິຖານ:** ຄວາມເປັນມາຂອງຄຳວ່າ "ຕີນ" ແລະ "ເທົ້າ"

ຄຳວ່າ "ຕີນ" ທີ່ເປັນຄຳນາມໄດ້ເກີດມີມາກ່ອນ. ສ່ວນຄຳວ່າ "ເທົ້າ" ທີ່ເປັນຄຳກິລິຍາເກີດພາຍຫຼັງຂອງການເກີດອຸບັດເຫດເຈັບຕີນ ຈຶ່ງຕ້ອງຊອກຫາໄມ້ມາເທົ້າເພື່ອໃຫ້ຍ່າງໄດ້. ຕໍ່ມາໄມ້ທີ່ຊ່ວຍເທົ້າຕີນໃຫ້ຍ່າງໄດ້ນັ້ນ ກໍຖືກເອີ້ນວ່າ "ໄມ້ເທົ້າ". ຕໍ່ມາເມື່ອຄຳວ່າ "ຕີນ" ທີ່ເປັນອະໄວຍະວະຕ່ຳສຸດຂອງຄົນຖືກນຳໄປໃຊ້ໃນຄຳເວົ້າບໍ່ສຸພາບ ໂດຍສະເພາະແມ່ນຄຳດ່າ ເຊັ່ນ "ບັກໜ້າສົ້ນຕີນ" "ຝາຕີນກູນີ້"... ຄົນໃນຕະກຸນພາສາລາວ-ໄທຈຳນວນໜຶ່ງ ເຊັ່ນ ລາວ ໄທ ຍວນ ເຂີນ ລື້ ໄທໃຫຍ່ ພາສາຈ້ວງແບບຈົວຈຽງ ຈຶ່ງເອົາຄຳວ່າ "ເທົ້າ" ທີ່ເປັນຄຳກິລິຍາ ມາປັບປ່ຽນເປັນຄຳນາມແທນຄຳວ່າ "ຕີນ" ໂດຍຖືເອົາ "ເທົ້າ" ເປັນຄຳສຸພາບ.

# 5 ໝາກໄມ້ ຊ່ວຍຂັບລ້າງສານພິດ

ໂດຍ: ກະຖິນປ່າ



ສຸກສະບາຍທາຍໂລດ



ໝາກໄມ້ທີ່ເຮົາກິນໃນທຸກໆວັນ ທ່ານຮູ້ບໍ່ວ່າມີຄຸນປະໂຫຍດຫຼາກຫຼາຍ ມື້ນີ້, ຜູ້ຂຽນຈະມາແນະນຳ 5 ໝາກໄມ້ໃກ້ໂຕ ທີ່ຫາຊື້ໄດ້ງ່າຍໆ ແລະ ອຸດົມໄປດ້ວຍຄຸນປະໂຫຍດດັ່ງນີ້:

**1. ໝາກແອັບເປີ້ນ:** ຊ່ວຍກຳຈັດສານພິດ ແລະ ປ້ອງກັນບໍ່ໃຫ້ໂປຣຕີນໃນລຳໄສ້ບູດ;

**2. ໝາກນັດ:** ຊ່ວຍປິ່ນປົວການອັກເສບໃນທາງເດີນອາຫານ ແລະ ຊ່ວຍໃນການເຮັດວຽກຂອງຕ່ອມລຳໄສ້;

**3. ໝາກລະແຊັງ:** ຊ່ວຍຟອກລ້າງຜິວໜັງ ຕັບ ໄຂ່ຫຼັງ ແລະ ລຳໄສ້ ສ້າງເຊວໃນຮ່າງກາຍ;



**4. ໝາກຫຸ່ງ:** ຊ່ວຍຂັບປັດສະວະ ແລະ ຊ່ວຍປິ່ນປົວບາດແຜ ໃນກະເພາະອາຫານ;

**5. ໝາກແຕງໂມ:** ມີສ່ວນຊ່ວຍເຮັດຄວາມສະອາດໃນລຳໄສ້ແລະຍັງຊ່ວຍຍ່ອຍອາຫານນຳອີກ.

**ຂໍ້ມູນຈາກ: ສູນກວດສຸຂະພາບ ຄົບວົງຈອນ.**

## ໜັກຫາຍ ລະບາຍ



*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສຽມທ້ຽນ

* *ໃນເດືອນຕຸລານີ້ມີຫຼາຍເຫດການສຳຄັນ ນັ້ນກໍຄືກອງປະຊຸມສຸດຍອດອາຊຽນ* ***ຄັ້ງທີ 44-45*** *ແລະ ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ* ***ຄັ້ງທີ45*** *ທີ່* ***ສປປລາວ*** *ເປັນເຈົ້າພາບໃນປີນີ້ ມີຖະແຫຼງຂ່າວແຈ້ງ ບອກກ່າວເປັນທາງການ ຫຼາຍອະນຸກຳມະການ ກະກຽມອຽກງານຄວາມພ້ອມປອງອົງເຊີຍຍ້ອງ ເຫດການປະຫວັດສາດເປີດໂອກາດໃຫ້ຊາວໂລກຮັບຮູ້ວ່າລາວປຽບພິກລີ້ໜູໜ່ອຍນ້ອຍ ແຕ່ຄວາມພ້ອມໃຫຍ່ຫຼວງ* ***ນັ້ນແລ້ວ!***

* ***ອົມເຊີຍ****ວັນຄູແຫ່ງຊາດ ຄົບຮອບ* ***30 ປີ*** *ທີ່ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ຫຼາຍຄົນຖືດອກໄມ້ຂອງຂວັນກ່ອງສວຍງາມ ບ່ານາວອຍພອນຄູ ເນື່ອງໃນວັນນັ້ນ* ***7 ຕຸລາ****ນັບກ້ອງ ບູຊາຄູຜູ້ສອນສັ່ງ ຕອບແທນຄຸນຄ່າລ້ຳ ຈົ່ງແຊງເຂັ້ມໜີບວັດສາ* ***ຄູເອີຍ!***

## ທາງສອງເສັ້ນ

ອາດ ກະວີລາວ

# ມ ດວງມາລາ

* ກະວີວອນສິ່ງໃຫ້ ໄວໜຸ່ມຍິງສາວ
ນັກຮຽນເຮົາຫວນຄິດ ຮ່ຳຮອນວິໄຈແຈ້ງ
ນຳມາປົວແປງແກ້ ບັນຫາເຄີຍບົກຜ່ອງ
ຂອງຕົນເອງເພື່ອໃຫ້ ຊີວິດໄດ້ພັດທະນາ

* ຜ່ານມາມີນາດນ້ອງ ບາງຜ່ອງເມີນເສີຍ
ລະເລີຍໃນການຮຽນ ບໍ່ສຶກສາຄົ້ນ
ວິນແນມເຂັມໂມງຍ້າຍ ຍາມຄູບັນຍາຍບອກ
ບໍ່ເຄີຍຟັງຄຶດຄົ້ນ ວິນແຕ່ໂສເລື່ອງຫຼິ້ນ ລືມເຫຼົ້າຄື່ມເບຍ

* ບາງຄົນອວດເກັ່ງກ້າ ວາງທ່າອັນຕະພານ
ວັນໆຊວນຊຸມແຊວ ນັດຕີຣາວີຂ້າ
ຜິດກັນປານສຸນັກບ້າ ຣາວີຕີບຕ່ອຍ
ເຫດຜົນພຽງເລັກນ້ອຍ ຄືຕີຕ້ານຍາດແຟນ ໝ່າຍເດ!

* ຫຼາຍປະເດັນເດັ່ນຮ້ອນ ເຫັນຢູ່ຫຼວງຫຼາຍ
ໃນສັງຄົມປັດຈຸບັນ ອາເນກນັບນອງມື້ວ
ກໍ່ຈະເສຍການຮຽນລ້າ ຫາກສັນຫາແນວບໍ່ແມ່ນ
ສັງຄົມຊິກ່າວເວົ້າ ເສຍໜ້າພໍ່ແມ່ຕົນ

* ທາງທີ່ດີຄວນຄຶດຄົ້ນ ຕັ້ງຕໍ່ຮຽນໜັງສື
ຖືສິນທຳມາເປັນຫຼັກ ຄວບຄຸມໃຈຕົນໄວ້
ທາງຊົ່ວດີມີໃຫ້ ເຮົາເດີນຕາມໄຕ່
ແລ້ວແຕ່ໃຈນາດນ້ອງ ຊິທຽວເບື້ອງບ່ອນໃດ ນັ້ນແລ້ວ!




## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ຊິເອົາຈັ່ງໃດ

ແມ່ລູກອ່ອນໄວສາວ ໄດ້ອູ້ມລູກຂຶ້ນລົດໄຟ ເພື່ອເດີນທາງໄປທ່ອງທ່ຽວ ເວລາທີ່ລູກໄຫ້ ລາວມັກຈະເວົ້າວ່າ:

**"ຮີບກິນນົມໄວໆ ຖ້າບໍ່ກິນ ແມ່ຊິໃຫ້ພໍ່ລຸງຢູ່ທາງຂ້າງກິນໄດ໋"**

ລູກໄຫ້ເທື່ອໃດລາວຈະເວົ້າແບບນັ້ນ ວົນຢູ່ສອງສາມຮອບຈົນລຸງທີ່ນັ່ງຢູ່ທາງຂ້າງໃຈຮ້າຍຈົນຮ້ອງອອກມາວ່າ:

**"ຖາມລູກມຶງດີໆດູ ຊິເອົາຈັ່ງໃດ? ທີ່ຄີງ ກູຄອບລົງແຕ່ສອງສະຖານີທີ່ແລ້ວລະໄດ໋ ຖາມມັນດູມັນຊິເອົາຈັ່ງໃດ"** !!!!!!!??????



## ຄະຕິເຕືອນໃຈ

# ດອກຫຍ້າ

ບັນຫາເຮັດໃຫ້ເຮົາຍ່າງຊ້າລົງ
ແຕ່ຢ່າໃຊ້ເປັນເຫດຜົນ ໃນການຢຸດຍ່າງ

ລັດຖະສະພາຕ່າງປະເທດ

# ປະທານາທິບໍດີສີລັງກາ ຍຸບສະພາ

(Xinhua) - ທ່ານ ອະນຸຣາ ກຸມາຣາ ດິສສະໜາຢາເກ (Anura Kumara Dissanayake) ປະທານາທິບໍດີ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ປະຊາທິປະໄຕ ສີລັງກາ ໄດ້ປະກາດຍຸບລັດຖະສະພາຜ່ານແຈ້ງການພິເສດໃນຈົດໝາຍເຫດທາງລັດຖະການ ຕອນທ່ຽງຄືນວັນອັງຄານທີ 25 ກັນຍາຜ່ານມາ, ໂດຍກຳນົດການເລືອກຕັ້ງສະມາຊິກລັດຖະສະພາ ໃນວັນທີ 14 ພະຈິກ ແລະ ລັດຖະສະພາຊຸດໃໝ່ຈະມີກອງປະຊຸມຄັ້ງທຳອິດ ໃນວັນທີ 21 ພະຈິກນີ້.

ທ່ານ ດິສສະໜາຢາເກ ຊະນະການເລືອກຕັ້ງປະທານາທິບໍດີ ເມື່ອວັນທີ 21 ກັນຍາຜ່ານມາ ດ້ວຍຄະແນນສຽງປະມານ 5.7 ລ້ານສຽງ.

ລັດຖະສະພາຂອງສີລັງກາ ມີສະມາຊິກ 225 ທ່ານ ແລະ ລັດຖະສະພາຊຸດປັດຈຸບັນມີວາລະດຳລົງຕຳແໜ່ງ 5 ປີ ຈະສິ້ນສຸດລົງໃນເດືອນສິງຫາ 2025.



# ສະພາຕໍ່າອາເມລິກາ ຜ່ານຮ່າງກົດໝາຍ ຄຸ້ມຄອງຜູ້ສະໝັກຮັບເລືອກຕັ້ງປະທານາທິບໍດີ



(Xinhua) - ວັນສຸກທີ 20 ກັນຍາຜ່ານມາ, ສະພາຕໍ່າສະຫະລັດ ໄດ້ລົງມະຕິຮັບຮອງເອົາຮ່າງກົດໝາຍທີ່ມີຈຸດປະສົງເພື່ອໃຫ້ອົງການສືບລັບ (Secret Service) ເພີ່ມທະວີການຄຸ້ມຄອງຜູ້ຖືກສະເໜີຊື່ຊີງຕຳແໜ່ງປະທານາທິບໍດີແລະຮອງປະທານາທິບໍດີ, ພຽງບໍ່ເທົ່າໃດວັນຫຼັງຈາກຄວາມພະຍາຍາມລອບສັງຫານອະດີດປະທານາທິບໍດີ ໂດນັນ ທຣຳ (Donald Trump) ເປັນຄັ້ງທີສອງ; ຜົນການລົງຄະແນນສຽງເປັນເອກະສັນ 405-0 ສະແດງໃຫ້ເຫັນການສະໜັບສະໜູນຈາກທັງສອງພັກໃນການເພີ່ມການຮັກສາຄວາມປອດໄພທ່າມກາງຄວາມຮຸນແຮງທາງການເມືອງທີ່ເພີ່ມຂຶ້ນກ່ອນການເລືອກຕັ້ງໃນເດືອນພະຈິກນີ້.

ກົດໝາຍວ່າດ້ວຍການເພີ່ມທະວີຄວາມປອດໄພຂອງປະທານາທິບໍດີຈະຮຽກຮ້ອງໃຫ້ອົງການສືບລັບຂອງສະຫະລັດ "ນຳໃຊ້ມາດຕະຖານດຽວກັນໃນການກຳນົດຈຳນວນເຈົ້າໜ້າທີ່ທີ່ຈຳເປັນເພື່ອຄຸ້ມຄອງປະທານາທິບໍດີ, ຮອງປະທານາທິບໍດີ, ແລະ ຜູ້ສະໝັກຊິງຕຳແໜ່ງປະທານາທິບໍດີ ແລະ ຮອງປະທານາທິບໍດີຄົນສຳຄັນ."

# ຄາລິຟໍເນຍ ຜ່ານກົດໝາຍຈຳກັດການໃຊ້ໂທລະສັບມືຖືຢູ່ໂຮງຮຽນ ແລະ ອອກກົດໝາຍໃໝ່ປົກປ້ອງການເງິນ ເນັດ ໄອດອນ



ທ່ານ ກາວິນ ນິວຊຳ (Gavin Newsom) ເຈົ້າຄອງລັດຄາລິຟໍເນຍ (California), ສະຫະລັດອາເມລິກາ ໄດ້ລົງນາມໃນກົດໝາຍທີ່ຮຽກຮ້ອງໃຫ້ໂຮງຮຽນຈຳກັດການໃຊ້ໂທລະສັບມືຖືຂອງເດັກ ທ່າມກາງຄວາມເຫັນດີເຫັນພ້ອມວ່າການໃຊ້ເຄື່ອງມືສື່ສານຫຼາຍເກີນໄປ ອາດຈະເພີ່ມຄວາມສ່ຽງຕໍ່ການເຈັບປ່ວຍທາງຈິດ ແລະ ສິ່ງຜົນກະທົບຕໍ່ການຮຽນຮູ້ຂອງນັກຮຽນ.

ສຳນັກຂ່າວ AFP ລາຍງານເມື່ອວັນທີ 24 ກັນຍາຜ່ານມາວ່າ ໃນປີນີ້ ມີອີກ 13 ລັດໃນທົ່ວປະເທດອາເມລິກາທີ່ປະກາດຫ້າມຫຼືຈຳກັດການໃຊ້ໂທລະສັບມືຖືຢູ່ໂຮງຮຽນ ຫຼື ແນະນຳໃຫ້ຄູໃນພື້ນທີ່ຈັດຕັ້ງປະຕິບັດ ຫຼັງຈາກລັດຟລໍຣິດາ (Florida) ໄດ້ນຳໜ້າໃນການຫ້າມໃຊ້ໂທລະສັບມືຖືໃນຫ້ອງຮຽນຕັ້ງແຕ່ປີ 2023.

ຄຳສັ່ງລະດັບລັດຄາລິຟໍເນຍ ເກີດຂຶ້ນຕາມຫຼັງການຕັດສິນໃຈຂອງເຂດການສຶກສາລອສແອງເຈລີສ (Los Angeles) ເຊິ່ງສັ່ງຫ້າມນັກຮຽນໃນພື້ນທີ່ປະມານ 429,000 ຄົນ ບໍ່ໃຫ້ໃຊ້ໂທລະສັບມືຖືຢູ່ໂຮງຮຽນເມື່ອເດືອນມິຖຸນາຜ່ານມາ.

ກົດໝາຍດັ່ງກ່າວ ຜ່ານການຮັບຮອງເອົາດ້ວຍຄະແນນສຽງ 76 ຕໍ່ 0 ໃນສະພາຜູ້ແທນປະຊາຊົນລັດຄາລິຟໍເນຍ (ທີ່ມີ 80 ທີ່ນັ່ງ) ແລະ 38 ຕໍ່ 1 ໃນສະພາສູງຂອງລັດ (ທີ່ມີ 40 ທີ່ນັ່ງ) ມີເນື້ອໃນສຳຄັນຄື: ການກຳນົດໃຫ້ຄະນະກຳມະການໂຮງຮຽນຫຼືອົງການຄຸ້ມຄອງທີ່ກ່ຽວຂ້ອງ ພັດທະນານະໂຍບາຍເພື່ອຈຳກັດ ຫຼື ຫ້າມນັກຮຽນໃຊ້ໂທລະສັບມືຖືໃນສະຖານການສຶກສາພາຍໃນວັນທີ 01 ກໍລະກົດ 2026 ແລະ ຕ້ອງມີການທົບທວນຄືນນະໂຍບາຍທຸກໆ 5 ປີ.

ທ່ານ ນິວຊຳ ກ່າວວ່າ ຕົນຮູ້ດີວ່າໂທລະສັບມືຖື ກໍ່ໃຫ້ເກີດຄວາມກັງວົນ, ພາວະຊຶມເສົ້າ ແລະ ບັນຫາສຸຂະພາບຈິດອື່ນໆ ຈຶ່ງຫວັງເປັນຢ່າງຍິ່ງວ່າ ກົດໝາຍສະບັບນີ້ຈະຊ່ວຍໃຫ້ນັກຮຽນສຸມໃສ່ການສຶກສາ, ການພົວພັນທາງສັງຄົມ ແລະ ໂລກຢູ່ຕໍ່ໜ້າພວກເຂົາແທນທີ່ຈະຢູ່ກັບໜ້າຈໍອຸປະກອນເອເລັກໂຕຣນິກເມື່ອຢູ່ໃນໂຮງຮຽນ.

ວັນທີ 26 ກັນຍາ, ເຈົ້າຄອງລັດຄາລິຟໍເນຍ ຍັງໄດ້ລົງນາມໃນກົດໝາຍສະບັບໃໝ່ຂອງລັດ ຮ່ວມກັບ ເດມີ ໂລວາໂຕ (Demi Lovato) ນັກຮ້ອງຍິງ ແລະ ອະດີດນັກສະແດງເດັກທີ່ມີຊື່ສຽງ ເຊິ່ງບັງຄັບໃຫ້ພໍ່ແມ່ ແລະ ຜູ້ປົກຄອງ ຕ້ອງນຳເງິນລາຍໄດ້ຈຳນວນໜຶ່ງທີ່ເດັກຫາມາໄດ້ຈາກຊ່ອງທາງອິນເຕີເນັດ ຝາກເຂົ້າໃນບັນຊີເງິນຝາກກອງທຶນທີ່ເຊື່ອຖືໄດ້ (trust account) ພາຍໃຕ້ຊື່ຂອງເດັກ; ທ່ານຍັງໄດ້ລົງນາມໃນກົດໝາຍສະບັບທີ 2 ທີ່ຂະຫຍາຍ "ກົດໝາຍຄູແກນ" (Coogan) ຂອງລັດ ເຊິ່ງເປັນກົດໝາຍຕົ້ນສະບັບທີ່ປົກປ້ອງນັກສະແດງເດັກໃນຮອນລີວູດ (Hollywood) ມາເປັນເວລາດົນນານ ໂດຍກຳນົດໃຫ້ມີການປົກປ້ອງກວມເອົາເດັກທີ່ເຮັດວຽກເປັນຜູ້ສ້າງເນື້ອຫາ (content) ເຜີຍແຜ່ຜ່ານຊ່ອງທາງອອນລາຍນຳດ້ວຍ.

ກົດໝາຍໃໝ່ກຳນົດໃຫ້ພໍ່ແມ່ ແລະ ຜູ້ປົກຄອງ ຕ້ອງນຳເງິນລາຍໄດ້ຂອງເດັກທີ່ເປັນ "ເນັດ ໄອດອນ" (net idol - ບຸກຄົນທີ່ໄດ້ຮັບຄວາມນິຍົມທາງອິນເຕີເນັດ) ຫຼື "ອິນຟລູເອນເຊີ" (influencer - ຜູ້ມີອິດທິພົນ) ໃນອັດຕາສ່ວນ 15% ຂອງລາຍໄດ້ທັງໝົດຂອງພວກເຂົາ ຝາກໄວ້ໃນບັນຊີເງິນຝາກກອງທຶນທີ່ເຊື່ອຖືໄດ້ ເຊິ່ງຈະບໍ່ມີການເບີກຖອນຈົນກວ່າເດັກທີ່ເປັນເຈົ້າຂອງບັນຊີ ຈະມີອາຍຸຄົບ 18 ປີ.

ຖະແຫຼງການຂອງສຳນັກງານເຈົ້າຄອງລັດຄາລິຟໍເນຍກ່າວວ່າ: ກົດໝາຍດັ່ງກ່າວຈະຊ່ວຍປົກປ້ອງເດັກທີ່ສ້າງ ຫຼື ປະກອບສ່ວນສ້າງເນື້ອຫາອອນລາຍຈາກການສໍ້ໂກງ ຫຼື ການຂູດຮີດທາງດ້ານການເງິນ. ໃນ Hollywood ຍຸກເກົ່າ, ນັກສະແດງເດັກແມ່ນຜູ້ທີ່ຖືກຂູດຮີດ; ສ່ວນປັດຈຸບັນ, ອິນຟລູເອນເຊີເດັກ ແມ່ນຜູ້ທີ່ມັກຈະຖືກເອົາປຽບ. ແຕ່ກົດໝາຍໃໝ່ສອງສະບັບນີ້ຈະຊ່ວຍປົກປ້ອງອິນຟລູເອນເຊີເດັກທີ່ເຜີຍແຜ່ຜົນງານຂອງພວກເຂົາຕາມເວທີຕ່າງໆເຊັ່ນ: TikTok, Instagram, YouTube ແລະ ເວທີສື່ສັງຄົມອື່ນໆ.

# ອິນໂດເນເຊຍ ແລະ ປາປົວນິວກິເນ ລົງນາມ MOU ຮ່ວມມືດ້ານລັດຖະສະພາ



(Xinhua) - ວັນທີ 27 ກັນຍາຜ່ານມາ, ສາທາລະນະລັດອິນໂດເນເຊຍ ແລະ ລັດເອກະລາດປາປົວນິວກິເນ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ (MoU) ເພື່ອສົ່ງເສີມການເຈລະຈາດ້ານການເມືອງລະຫວ່າງລັດຖະສະພາສອງປະເທດ; ບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ໄດ້ຮັບການລົງນາມໃນການພົບປະສອງຝ່າຍລະຫວ່າງທ່ານ ນາງ ປວນ ມະຫາຣານີ (Puan Maharani) ປະທານສະພາຜູ້ແທນປະຊາຊົນ (ສະພາຕໍ່າ) ອິນໂດເນເຊຍ ແລະ ທ່ານ ຈ໊ອບ ໂປມັດ (Job Pomat) ປະທານລັດຖະສະພາປາປົວນິວກິເນ ທີ່ນະຄອນຫຼວງຈາກາຕາ.

ທ່ານ ນາງ ປວນ ກ່າວວ່າ: ບົດບັນທຶກຄວາມເຂົ້າໃຈສະບັບນີ້ຈະເຮັດໃຫ້ທັງສອງປະເທດສາມາດປຶກສາຫາລືບັນຫາຕ່າງໆລວມທັງການຮ່ວມມືດ້ານລັດຖະສະພາ, ການຮ່ວມມືດ້ານເສດຖະກິດແລະການຮ່ວມມືດ້ານຊາຍແດນ; ຫວັງວ່າບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ຈະຮັກສາການພົວພັນອັນດີງາມ ແລະ ເພີ່ມທະວີການຮ່ວມມືລະຫວ່າງປະເທດບ້ານໃກ້ເຮືອນຄຽງໃນທຸກຂົງເຂດ, ໃນນັ້ນມີການຄ້າ ແລະ ຄວາມໝັ້ນຄົງ.

## ເຝົ້າໄວ້ ໄດ້ບົດຮຽນ

# ຫຼິ້ນກັບໜ້າຈໍເກີນ 3 ຊົ່ວໂມງ ເປັນອັນຕະລາຍຕໍ່ສຸຂະພາບຂອງເດັກ

❖ ວິເສດ ສະແຫວງສຶກສາ

ຂ່າວຕ່າງປະເທດທີ່ນຳມາສະເໜີໃນບົດນີ້ ມີຢູ່ 2 ເລື່ອງ ເຊິ່ງລ້ວນແຕ່ພົວພັນກັບການໃຊ້ເຄື່ອງມືໄອທີໃນຍຸກດິຈິຕອນ ຢູ່ປະເທດຊູແອດ (ສະວີເດັນ) ແລະ ປະເທດແຟງລັງ (ຟິນແລນ). ສຳລັບຢູ່ປະເທດຊູແອດນັ້ນ. ຂ່າວບອກວ່າທາງອົງການສາທາລະນະສຸກແຫ່ງຊາດ ໄດ້ອອກຄຳແນະນຳໃນວັນທີ 3 ກັນຍາ ປີນີ້ ກ່ຽວກັບເວລາທີ່ເໝາະສົມສຳລັບເດັກ ແລະ ໄວໜຸ່ມໃນການຕິດຕາມໜ້າຈໍເຄື່ອງມືສື່ສັງຄົມ ເພື່ອການຮໍ່າຮຽນ ຫຼື ເພື່ອການບັນເທີງ. ຄຳແນະນຳດັ່ງກ່າວ ອອກມາພາຍຫຼັງໄດ້ມີການຄົ້ນຄວ້າ ແລະ ພົບວ່າຄົນໃນໄວເດັກແລະໄວໜຸ່ມຊູແອດ ໄດ້ຮັບຜົນທາງບວກແລະທາງລົບຈາກສື່ດິຈິຕອນ ແລະ ພວກເຂົາມີຄວາມຕື່ນຕົວປັບປ່ຽນພຶດຕິກຳດັ່ງກ່າວ. ຜົນສະທ້ອນທາງລົບຕົ້ນຕໍ ຈາກໜ້າຈໍສຳລັບເດັກນ້ອຍແລະໄວໜຸ່ມໃນປະເທດຊູແອດນັ້ນ ພົວພັນກັບການຫຼັບນອນທີ່ຂາດຄຸນນະພາບ (ນອນບໍ່ຫຼັບ ຫຼື ນອນບໍ່ອີ່ມຕາ) ອັນທີສອງແມ່ນອາການຊຶມເສົ້າ ແລະ ສາມແມ່ນເລື່ອງອາລົມຈິດປັ່ນປ່ວນ ບໍ່ໝັ້ນໃຈໃນຮ່າງກາຍຂອງຕົນເອງ. ໃນຄຳແນະນຳໄດ້ມີການກຳນົດໄລຍະຄວາມຍາວຂອງເວລາທີ່ຄົນໃນໄວໜຸ່ມສາມາດນຳໃຊ້ສື່ສັງຄົມຕໍ່ວັນດັ່ງນີ້: ສຳລັບເດັກອາຍຸຕໍ່າກວ່າ 2 ປີ ບໍ່ຄວນໃຫ້ຫຼິ້ນກັບໜ້າຈໍເລີຍ, ເດັກນ້ອຍແຕ່ 2-5 ປີ ໃຫ້ຫຼິ້ນໄດ້ບໍ່ເກີນ 1 ຊົ່ວໂມງ, 6-12 ປີບໍ່ຄວນເກີນ 1-2 ຊົ່ວໂມງ ແລະ 13-18 ປີ ບໍ່ຄວນເກີນ 2-3 ຊົ່ວໂມງ. ຄຳແນະນຳຍັງສະເໜີວ່າ ພໍ່-ແມ່ ກໍຄືຜູ້ປົກຄອງຂອງເດັກ ຄວນເກັບໂທລະສັບມືຖື ແລະ ແທັບເລັດໄວ້ນອກຫ້ອງນອນຂອງເດັກໃນຕອນກາງຄືນ ຫຼື ກຳນົດເປັນກົດລະບຽບໃຫ້ເດັກນ້ອຍປະຕິບັດເອງ. ການມີເວລາຈຳກັດໃນການເຂົ້າເຖິງໜ້າຈໍເຄື່ອງມືສື່ສັງຄົມນີ້ ຈະຊ່ວຍໃຫ້ຄົນໃນເກນອາຍຸເຍົາໄວນີ້ມີເວລາພັກຜ່ອນແລະອອກກຳລັງກາຍໄດ້ຢ່າງພຽງພໍ. ພ້ອມດຽວກັນນັ້ນ, ທາງການຂອງຊູແອດ ຍັງໄດ້ສະເໜີໃຫ້ບັນດາບໍລິສັດເຕັກໂນໂລຊີ ສະແດງຄວາມຮັບຜິດຊອບຫຼາຍຂຶ້ນກວ່າເກົ່າ ໃນການຫຼຸດຜ່ອນຄວາມສ່ຽງດ້ານສຸຂະພາບໃນກຸ່ມເດັກນ້ອຍ ແລະ ໄວໜຸ່ມ ຍ້ອນການນຳໃຊ້ເຄື່ອງມືສື່ສັງຄົມໃນເວລາທີ່ຄວນພັກຜ່ອນຫຼັບນອນ ຫຼື ອອກກຳລັງກາຍ. ການປ່ອຍໃຫ້ເດັກນ້ອຍ ແລະ ຄົນໃນເກນອາຍຸທີ່ກ່າວມາຂ້າງເທິງຫຼິ້ນກັບໜ້າຈໍເກີນ 3 ຊົ່ວໂມງຕໍ່ວັນ ຈະເຮັດໃຫ້ມີການເສບຕິດໂລກດິຈິຕອນຈົນເງີຍຫົວບໍ່ຂຶ້ນ, ອັນຈະພາໃຫ້ນອນບໍ່ຫຼັບ, ບໍ່ສົນໃຈເຄື່ອນໄຫວພົວພັນໃນສັງຄົມ ແລະ ຈຳກັດໂອກາດໄດ້ເຄື່ອນໄຫວທາງຮ່າງກາຍອີກດ້ວຍ.

ຂ່າວໄດ້ຖິ້ມທ້າຍວ່າ ເນື້ອໃນເອກະສານແນະນຳຂອງທາງການຄັ້ງນີ້ ແມ່ນຜົນຈາກການປຶກສາຫາລືຮ່ວມກັບເດັກນ້ອຍ, ບັນດາຊ່ຽວຊານ ແລະ ໜ່ວຍງານກ່ຽວຂ້ອງຕ່າງໆຢູ່ພາຍໃນປະເທດ, ໜ່ວຍງານຈາກປະເທດນອກແວແລະອົງການອະນາໄມໂລກ(WHO) ອີກຂ່າວໜຶ່ງທີ່ເກີດຂຶ້ນໃນໄລຍະດຽວກັນນັ້ນ ກໍຄືທາງການຂອງປະເທດແຟງລັງ ໄດ້ຂຶ້ນແຜນແນະນຳໃຫ້ໂຮງຮຽນຕ່າງໆ ສັ່ງຫ້າມການໃຊ້ໂທລະສັບມືຖືໃນລະຫວ່າງຊົ່ວໂມງຮຽນ ແລະ ໃນເວລາທີ່ຄວນໃຊ້ ເພື່ອພັກຜ່ອນສຳລັບບັນດາເດັກນັກຮຽນ. ຂ່າວບອກວ່າເປົ້າໝາຍຂອງການສັ່ງຫ້າມແມ່ນເພື່ອເຮັດໃຫ້ເດັກນັກຮຽນມີຄວາມຕັ້ງໃຈ, ສຸມສະມາທິໃສ່ການຮຽນ, ການສອນ ແລະ ມີໂອກາດໄດ້ພັກຜ່ອນໃນເວລາວ່າງ. ໃນປັດຈຸບັນ ກະຊວງສຶກສາຂອງແຟງລັງ ພວມກະກຽມກົດລະບຽບເພື່ອຈຳກັດການນຳໃຊ້ໂທລະສັບມືຖືພາຍໃນຫ້ອງຮຽນ ເພື່ອສະເໜີໃຫ້ກອງປະຊຸມລັດຖະສະພາຮັບຮອງເອົາຢ່າງເປັນທາງການ.

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ
ລັດຖະທຳມະນູນ
ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ:
laocon@nalao.la




#ບ່າວກະບື

ຢູ່ຮ້ານຂາຍເຄື່ອງໃຊ້ປະຈຳເຮືອນ ມີປ້າຍແຜ່ນໜຶ່ງຂຽນວ່າ: "ຫາກຊອກຊື້ແຕ່ຕູ້ເຮັດນ້ຳເຢັນລາຄາຖືກໆ ທ່ານອາດຈະພົ້ງໄປຕົກໃສ່ນ້ຳຮ້ອນໆກໍ່ໄດ້."

#BAOKBU

Sign in a domestic-appliances department: "Going in for cheap water coolers may land you in hot water."

## ຮອງປະທານ...

(ຕໍ່ຈາກໜ້າ 4)

ຕ້ອງຕາມກົດໝາຍ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ ເພື່ອເປັນຂໍ້ມູນສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ. ພ້ອມກັນນັ້ນ, ຍັງໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ກ່ຽວກັບສະພາບການຈັດຕັ້ງປະຕິບັດການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ແລະ ການພັດທະນາຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນເຊື່ອມຈອດເຂົ້າສູ່ແລວທາງເສດຖະກິດ, ການຄຸ້ມຄອງການຂົນສົ່ງສິນຄ້າແລະແຮ່ທາດ, ການຊຳລະງົບປະມານໃຫ້ແກ່ໂຄງການກໍ່ສ້າງ ແລະ ການເກັບລາຍຮັບຈາກການຂົນສົ່ງສິນຄ້າແລະແຮ່ທາດ(ຕາມຄຳຖາມເຈາະຈີ້ມ).

ຫຼັງຈາກນັ້ນ, ກໍໄດ້ພ້ອມກັນລົງພາກສະໜາມເພື່ອເກັບກຳຂໍ້ມູນຢ່າງລະອຽດ ພ້ອມທັງຕິດຕາມກວດກາພື້ນທີ່ຕົວຈິງເປັນຕົ້ນ: ເສັ້ນທາງ 5B ແຕ່ 3 ແຍກເທສະບານແຂວງ ຫາ ບ້ານວຽງທອງ ເມືອງທ່າໂທມ, ເສັ້ນທາງແຕ່ຫຼູ່ຍເບ່ ເມືອງອະນຸວົງ ຫາ ບ້ານນ້ຳຊານ ແລະ ເສັ້ນທາງແຕ່ຂົວນ້ຳຍອນຫາບ້ານນ້ຳຜາໃຫຍ່ ເມືອງລ້ອງແຈ້ງ.

**(ນາງ ອຳໄພພອນ ແກ້ວວິໄລ)**

## ມອບວັດຖຸພັນ...

(ຕໍ່ຈາກໜ້າ 1)

ປະທານສະພາແຫ່ງຊາດ ໄດ້ຕາງໜ້າຮັບບັນດາວັດຖຸພັນແລະຂອງທີ່ລະລຶກຂອງທ່ານ ສະໝານ ວິຍະເກດ ອະດີດປະທານສະພາແຫ່ງຊາດຊຸດທີIII, IV ແລະ V; ຕາງໜ້າມອບໂດຍທ່ານ ນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຊິ່ງປະກອບມີບັນດາເຄື່ອງເງິນເຊັ່ນ: ໂຖດອກໄມ້ ແລະ ອື່ນໆ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວສະແດງຄວາມຂອບໃຈແລະຮຽກຮ້ອງໃຫ້ບັນດາທ່ານ ຫາກມີວັດຖຸ ຫຼື ອຸປະກອນຕ່າງໆ ທີ່ເຫັນວ່າເປັນມູນເຊື້ອປະຫວັດສາດທີ່ກ່ຽວພັນເຖິງສະພາແຫ່ງຊາດແຕ່ລະຊຸດ ກໍສາມາດນຳມາປະກອບສ່ວນເຂົ້າໃນຫ້ອງມູນເຊື້ອຂອງສະພາແຫ່ງຊາດໄດ້.

**(ສອນສັກ ວັນວິໄຊ)**







● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກິກ ບຸດດາໄຊ